# ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ - ສາຂານະຄອນຫລວງວຽງຈັນ

ບົດລາຍງານຂອງຜູ້ບໍລິຫານ ແລະ

ບົດລາຍງານການເງິນທີ່ສອດຄ່ອງກັບກົດໝາຍການບັນຊີ ຂອງ ສປປ ລາວ ແລະ ກົດລະບຽບການບັນຊີອື່ນໆ ທີ່ວາງອອກໂດຍທະນາຄານ ແຫ່ງ ສປປ ລາວ
ປະຈຳປີ ວັນທີ 31 ທັນວາ 2012

**ສາລະບານ**


| | ໜ້າ |
|---|---|
| ຂໍ້ມູນທົ່ວໄປ | 1 |
| ບົດລາຍງານຂອງຄະນະບໍລິຫານ | 2 |
| ບົດລາຍງານການເງິນ | |
| ບົດລາຍງານຂອງຜູ້ກວດສອບເອກະລາດ | 3 - 4 |
| ໃບລາຍງານຜົນໄດ້ຮັບ | 5 - 6 |
| ໃບສະຫລຸບຊັບສິນບັດ | 7 - 9 |
| ໃບລາຍງານການປ່ຽນແປງຂອງທຶນ | 10 |
| ໃບລາຍງານກະແສເງິນສົດ | 11 - 12 |
| ເອກະສານຊ້ອນທ້າຍບົດລາຍງານການເງິນ | 13 - 35 |

# ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ - ສາຂານະຄອນຫລວງວຽງຈັນ

## ຂໍ້ມູນທົ່ວໄປ

### ທະນາຄານ

ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ - ສາຂານະຄອນຫລວງວຽງຈັນ (“ທະນາຄານ”) ກໍ່ແມ່ນສາຂາໜຶ່ງຂອງທະນາຄານຈາກປະເທດຈີນ ທີ່ໄດ້ດຳເນີນທຸລະກິດຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (“ສປປ ລາວ PDR”) ພາຍໃຕ້ໃບອະນຸຍາດດຳເນີນທຸລະກິດທະນາຄານ ເລກທີ 16/ທຫລ ເຊິ່ງໄດ້ຮັບອານຸຍາດຈາກທະນາຄານ ແຫ່ງ ສປປ ລາວ (“ທຫລ”) ໂດຍມີຜົນສັກສິດນັບແຕ່ ເດືອນ ພະຈິກ 2011 ແລະ ໃບອະນຸຍາດດຳເນີນທຸລະກິດ ສະບັບປັບປຸງ ຢູ່ໃນ ເດືອນ ກຸມພາ 2012.

ທຶນຈົດທະບຽນຂອງທະນາຄານແມ່ນ 30 ລ້ານໂດລາ (“ໂດລາ”). ທຶນຈົດທະບຽນທີ່ໄດ້ຖອກແລ້ວໃນວັນທີ 31 ທັນວາ 2012 ແມ່ນ 30 ລ້ານໂດລາ, ທຽບເທົ່າກີບ 239,970 ລ້ານ (ທຶນຈົດທະບຽນທີ່ຖອກແລ້ວໃນວັນ 31 ທັນວາ 2011 ແມ່ນ 30 ລ້ານໂດລາ, ທຽບເທົ່າກີບ 239,970).

ການເຄື່ອນໄຫວຕົ້ນຕໍ່ຂອງທະນາຄານ ແມ່ນໃຫ້ບໍລິການທາງດ້ານການເງິນໃນ ສປປ ລາວ.
ທະນາຄານ ຕັ້ງຢູ່ຖະໜົນ ລ້ານຊ້າງ, ບ້ານເລກທີ 12, ບ້ານຫັດສະດີໄຕ້, ເມືອງ ຈັນທະບູລີ, ນະຄອນຫລວງວຽງຈັນ.

### ຄະນະບໍລິຫານ

ສະມາຊິກຂອງຄະນະບໍລິຫານພາຍໃນປີຈົນເຖິງມື້ອອກບົດລາຍງານສະບັບນີ້ມີດັ່ງນີ້:

| *ຊື່* | *ຕຳແໜ່ງ* | *ວັນທີແຕ່ງຕັ້ງ* |
|---|---|---|
| ທ່ານ. ລູຈ້ຽນ | ຜູ້ອຳນວຍການ | ຖືກແຕ່ງຕັ້ງໃນວັນທີ 28 ພະຈິກ 2011 |
| ທ່ານ. ເສິນ ອີງຈີ້ | ຮອງຜູ້ອຳນວຍການ | ຖືກແຕ່ງຕັ້ງໃນວັນທີ 25 ຕຸລາ 2012 |

### ຕົວແທນທາງກົດໝາຍ

ຕົວແທນທາງດ້ານກົດໝາຍຂອງສາຂາພາຍໃນປີ ແລະ ນະມື້ອອກບົດລາຍງານສະບັບນີ້ແມ່ນ ທ່ານ. ລູຈ້ຽນ

### ຜູ້ກວດສອບ

ຜູ້ກວດສອບການເງິນ ຂອງສາຂາ ແມ່ນບໍລິສັດ ເອີນແອນຢັງ ລາວ ຈຳກັດ.

# ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ - ສາຂານະຄອນຫລວງວຽງຈັນ

## **ບົດລາຍງານຂອງ**ຄະນະບໍລິຫານ

ຄະນະຜູ້ບໍລິຫານຂອງທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ - ສາຂານະຄອນຫລວງວຽງຈັນ (“ທະນາຄານ”) ມີຄວາມຍິນດີນຳສະເໜີບົດລາຍງານການເງິນຂອງ ສາຂາ ປະຈຳວັນທີ 31 ທັນວາ 2012.

**ຄວາມຮັບຜິດຊອບຂອງ ຄະນະບໍລິຫານຕໍ່ກັບບົດລາຍງານການເງິນ**

ຄະນະບໍລິຫານຂອງສາຂາແມ່ນມີຄວາມຮັບຜິດຊອບໃນການກະກຽມໃບລາຍງານຖານະການເງິນຂອງແຕ່ລະປີການບັນຊີ ໃຫ້ຖືກຕ້ອງຕາມຄວາມເປັນຈິງ ຂອງສາຂາ, ຜົນປະກອບການ ແລະ ກະແສເງິນສົດໃນປີ ໂດຍສອດຄ່ອງກັບ ກົດໝາຍການບັນຊີ ແລະ ກົດລະບຽບການບັນຊີອື່ນໆທີ່ວາງອອກໂດຍທະນາຄານແຫ່ງສປປລາວ.ໃນການກະກຽມບົດລາຍງານການເງິນ ດັ່ງກ່າວ, ຄະນະບໍລິຫານຂອງສາຂາຕ້ອງປະຕິບັດດັ່ງນີ້:

- ເລືອກເຟັ້ນເອົານະໂຍບາຍການບັນຊີທີ່ເໝາະສົມ ແລະ ນຳໃຊ້ຢ່າງສະໝ່ຳສະເໝີ;
- ມີການພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫຼງການວ່າ ບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດຕາມມາດຕະຖານ, ສິ່ງທີ່ໄດ້ປະຕິບັດແຕກຕ່າງຈາກມາດຕະຖານໄດ້ເປີດເຜີຍ ແລະ ອະທິບາຍ ຢູ່ໃນບົດລາຍງານການເງິນ; ແລະ
- ກະກຽມບົດລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ,ຍົກເວັ້ນໃນກໍລະນີທີ່ ສາຂາຫາກຕັ້ງຂໍ້ສົມມຸດຖານຫຼືຄາດຄະເນວ່າສາຂາຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະບໍລິຫານສາຂາຮັບປະກັນວ່າການບັນທຶກບັນຊີໄດ້ຖືກປະຕິບັດຢ່າງຖືກຕ້ອງເຊິ່ງໄດ້ເປີດເຜີຍຖານະການເງິນຂອງທະນາຄານຢ່າງເໝາະສົມໃນທຸກເວລາ ແລະ ຮັບປະກັນວ່າການບັນທຶກບັນຊີ ແມ່ນສອດ ຄ່ອງກັບລະບົບການບັນຊີທີ່ໄດ້ນຳໃຊ້. ຄະນະບໍລິຫານຂອງສາຂາຍັງຮັບຜິດຊອບຕໍ່ການຮັກສາຊັບສົມບັດຂອງສາຂາ ແລະ ດ້ວຍເຫດ ນັ້ນ ຕ້ອງມີຂັ້ນຕອນທີ່ເໝາະສົມເພື່ອປ້ອງກັນແລະຄົ້ນຫາການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະບໍລິຫານຂອງສາຂາຂໍຢັ້ງຢືນວ່າ ສາຂາໄດ້ປະຕິບັດຕາມຂໍ້ກຳນົດທີ່ ກ່າວມາຂ້າງເທິງນີ້ໃນການກະກຽມບົດລາຍງານການເງິນ ສຳລັບ ທ້າຍປີວັນທີ 31 ທັນວາ 2012.

**ການຮັບຮອງບົດລາຍງານການເງິນ**

ຄະນະບໍລິຫານມີຄຳເຫັນວ່າໃບລາຍງານການເງິນໄດ້ສະແດງຖານະທາງການເງິນ, ຜົນປະກອບການ ແລະ ກະແສເງິນສົດຂອງສາຂານະວັນທີ 31 ທັນວາ 2012 ຢ່າງຖືກຕ້ອງ ແລະ ເໝາະສົມໂດຍສອດຄ່ອງກັບກົດໝາຍການບັນຊີ ແລະ ກົດລະບຽບການບັນຊີອື່ນໆ ທີ່ວາງອອກໂດຍທະນາຄານແຫ່ງ ສປປລາວ.

ຕາງໜ້າ ແລະ ໃນນາມຄະນະບໍລິຫານ:

---

ທ່ານ. ລູຈຽນ
ຜູ້ອຳນວຍການ

ນະຄອນຫລວງວຽງຈັນ, ສປປ ລາວ
29 ມີນາ 2013

ເລກທີອ້າງອີງ: 61031041/16060718

# ບົດລາຍງານຂອງຜູ້ກວດສອບເອກະລາດ

**ເຖິງ: ຄະນະຜູ້ບໍລິຫານ ຂອງ ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ - ສາຂາ ນະຄອນຫລວງວຽງຈັນ**

ພວກຂ້າພະເຈົ້າ ໄດ້ດຳເນີນການກວດສອບ ບົດລາຍງານຖານະການເງິນຂອງທະນາຄານ ("ສາຂາ"), ເຊິ່ງປະກອບດ້ວຍ ໃບສະຫລຸບຊັບສິນບັດ ນະວັນທີ 31 ທັນວາ 2012, ໃບລາຍງານຜົນໄດ້ຮັບ, ໃບລາຍງານກະແສເງິນສົດ ແລະ ໃບລາຍງານການ ປ່ຽນແປງຂອງທຶນ ສຳລັບທ້າຍປີ, ແລະ ບົດສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ ແລະ ເອກະສານຊ້ອນທ້າຍບົດລາຍ ງານການເງິນ ດັ່ງທີ່ກ່າວໄວ້ຢູ່ໜ້າ 5 ເຖິງ 35.

## *ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ບົດລາຍງານການເງິນ*

ຄະນະບໍລິຫານສາຂາ ແມ່ນມີຄວາມຮັບຜິດຊອບໃນການກະກຽມ ແລະ ນຳສະເໜີໃບລາຍງານການເງິນໃຫ້ຖືກຕ້ອງ ໂດຍສອດ ຄ່ອງກັບກົດໝາຍການບັນຊີ, ກົດລະບຽບການບັນຊີອື່ນໆທີ່ວາງອອກໂດຍທະນາຄານແຫ່ງສປປ ລາວ. ຄວາມຮັບຜິດຊອບ ລວມມີ: ການອອກແບບ, ການຈັດຕັ້ງປະຕິບັດ, ການດຳເນີນການຄວບຄຸມພາຍໃນທີ່ກ່ຽວຂ້ອງໃນການສ້າງ ແລະ ນຳສະເໜີ ບົດລາຍງານການເງິນທີ່ຖືກຕ້ອງເຊິ່ງປາດສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍອ້ນຄວາມຜິດ ພາດຕ່າງໆ; ເລືອກເຟັ້ນ ແລະ ນຳໃຊ້ນະໂຍບາຍການບັນຊີທີ່ແທດເໝາະ ແລະ ການຄາດຄະເນການບັນຊີທີ່ສົມເຫດຜົນໃນສະ ພາບການຕ່າງໆ.

## *ຄວາມຮັບຜິດຊອບຂອງຜູ້ກວດສອບ*

ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າ ແມ່ນອອກຄຳເຫັນຕໍ່ກັບເອກະສານລາຍງານການເງິນເຫລົ່ານີ້ ບົນພື້ນຖານຜົນການ ກວດສອບຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍສອດຄ່ອງກັບມາດຕະຖານການກວດສອບສາ ກົນ. ມາດຕະຖານເຫລົ່ານັ້ນຮຽກຮ້ອງໃຫ້ພວກຂ້າພະເຈົ້າປະຕິບັດຕາມຂໍ້ບັງຄັບດ້ານຈັນຍາບັນ, ວາງແຜນ ແລະ ດຳເນີນການ ກວດສອບເພື່ອໃຫ້ໄດ້ຮັບຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນ ແມ່ນປາດສະຈາກຜິດພາດອັນ ໃຫຍ່ຫຼວງ.

ການກວດສອບລວມມີກຳມະວິທີຕ່າງໆ ເພື່ອເກັບກຳຫຼັກຖານຢັ້ງຢືນຄວາມຖືກຕ້ອງ ຂອງຈຳນວນເງິນ ແລະ ການເປີດເຜີຍຂໍ້ມູນ ໃນບົດລາຍງານການເງິນ. ກຳມະວິທີການທີ່ນຳໃຊ້ໃນການກວດສອບ ແມ່ນຂຶ້ນກັບການວິນິໄສຂອງຜູ້ກວດສອບລວມເຖິງການ ປະເມີນລະດັບຄວາມສ່ຽງຂອງຂໍ້ຜິດພາດອັນໃຫ່ຍຫຼວງຂອງບົດລາຍງານການເງິນບໍ່ວ່າຈະແມ່ນຍ້ອນການສໍ້ໂກງ ຫລື ຄວາມຜິດ ພາດຕ່າງໆ. ໃນການປະເມີນຄວາມສ່ຽງດັ່ງກ່າວ, ຜູ້ກວດສອບຈະພິຈາລະນາບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການ ສ້າງ ແລະ ການນຳສະເໜີບົດລາຍງານການເງິນຂອງສາຂາ ເພື່ອອອກແບບກຳມະວິທີໃນການການກວດສອບໃຫ້ແທດເໝາະ ກັບສະພາບການຕ່າງໆແຕ່ບໍ່ແມ່ນ ເພື່ອຈຸດປະສົງໃນການອອກຄຳເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງ ສາຂາ. ການກວດສອບນີ້ຍັງລວມການປະເມີນຄວາມເໝາະສົມຂອງນະໂຍບາຍການບັນຊີທີ່ນຳໃຊ້ຢູ່, ຄວາມສົມເຫດສົມຜົນ

ຂອງການຄາດຄະເນທາງການບັນຊີທີ່ຄະນະບໍລິຫານວາງອອກ, ພ້ອມກັນນັ້ນກໍ່ຍັງປະເມີນພາບລວມຂອງການນຳສະເໜີບົດລາຍງານການເງິນອີກດ້ວຍ.

ພວກຂ້າພະເຈົ້າ ເຊື່ອວ່າຫຼັກຖານທີ່ໄດ້ມາຈາກການກວດສອບນັ້ນແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນ ຂອງພວກຂ້າພະເຈົ້າ.

***ຄຳເຫັນ***

ໃນຄຳເຫັນຂອງພວກຂ້າພະເຈົ້າ, ບົດລາຍງານການເງິນໄດ້ສະແດງ ຖານະການເງິນຂອງສາຂາຖືກຕ້ອງ ຕາມຕົວຈິງນະວັນທີ 31 ທັນວາ 2012 ແລະ ຜົນປະກອບການ ແລະ ກະແສເງິນສົດຂອງສາຂາ ປະຈຳປີ ໂດຍ ສອດຄ່ອງກັບກົດໝາຍບັນຊີ ແລະ ກົດລະບຽບບັນຊີອື່ນໆ ທີ່ວາງອອກໂດຍ ທະນາຄານແຫ່ງ ສປປ ລາວ.

ນະຄອນຫລວງວຽງຈັນ, ສປປ ລາວ

29 ມິນາ 2013

# ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ - ສາຂານະຄອນຫລວງວຽງຈັນ

ໃບລາຍງານຜົນໄດ້ຮັບ
ສຳລັບທ້າຍປີ ວັນທີ 31 ທັນວາ 2012

| *ລຳດັບ* | *ລາຍການ* | *ເອກະສານຊ້ອນທ້າຍ* | *2012 ກີບ* | *ສຳລັບໄລຍະເວລາ ແຕ່ວັນທີ 25 ສິງຫາ ວັນທີ 31 ທັນວາ 2011 ກີບ* |
|---|---|---|---|---|
| A. | **ລາຍຮັບ ແລະ ລາຍຈ່າຍຈາກການດຳເນີນງານ** | | | |
| 1. | **ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ** | 3 | **70,149,536,509** | **17,523,457** |
| 1.1 | ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ ລະຫວ່າງສາຂາ | | 33,398,357,646 | 17,523,457 |
| 1.2 | ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນຈາກລູກຄ້າ | | 7,292,856,393 | - |
| 1.3 | ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນອື່ນໆ | | 29,458,322,470 | - |
| 2. | ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ | 3 | **(27,083,076,290)** | **(5,009,374)** |
| 2.1 | ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ ລະຫວ່າງທະນາຄານ | | (23,630,275,834) | - |
| 2.2 | ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ ໃຫ້ລູກຄ້າ | | (3,452,800,456) | (5,009,374) |
| I. | **ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນສຸດທິ** | | **43,066,460,219** | **12,514,083** |
| 9 | **ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ** | 4 | **1,948,176,919** | **8,877,223** |
| 12 | **ກຳໄລ/(ຂາດທຶນ)ສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ ແລະ ທອງຄຳ** | | **151,016,818** | **(256,634,648)** |
| II. | **ລາຍຮັບສຸດທິຈາກາການດຳເນີນງານ** | | **45,165,653,956** | **(235,243,342)** |
| B | **ລາຍຮັບ ແລະ ລາຍຈ່າຍອື່ນໆ** | | | |
| 13 | **ລາຍຮັບອື່ນໆຈາກການດຳເນີນງານ** | | **-** | **998,994** |
| 14 | **ລາຍຈ່າຍຄ່າບໍລິຫານ** | | **(20,874,346,272)** | **(2,500,915,851)** |
| 14.1 | ລາຍຈ່າຍເງິນເດືອນ ແລະ ອື່ນໆທີ່ກ່ຽວຂ້ອງກັບພະນັກງານ | 5 | (11,732,192,816) | (688,780,184) |
| 14.2 | ລາຍຈ່າຍຄ່າບໍລິຫານອື່ນໆ | 6 | (9,142,153,456) | (1,812,135,667) |

# ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ - ສາຂານະຄອນຫລວງວຽງຈັນ

ໃບລາຍງານຜົນໄດ້ຮັບ (ຕໍ່)
ສຳລັບທ້າຍປີ ວັນທີ 31 ທັນວາ 2012

| *ລຳດັບ* | *ລາຍການ* | *ເອກະສານຊ້ອນທ້າຍ* | *2012 ກີບ* | *ສຳລັບໄລຍະເວລາ ແຕ່ວັນທີ 25 ສິງຫາ ວັນທີ 31 ທັນວາ 2011 ກີບ* |
|---|---|---|---|---|
| 15 | **ຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມ** | | (1,869,582,528) | (103,888,080) |
| 16 | **ລາຍຈ່າຍອື່ນໆຈາກການດຳເນີນງານ** | 7 | (4,901,376,792) | (35,550,343) |
| III. | **ລວມຍອດກຳໄລກ່ອນອາກອນ** | | 17,520,348,364 | (2,874,598,622) |
| 18 | **ອາກອນກຳໄລພາຍໃນປີ** | 18 | (4,100,411,354) | (1,423,478) |
| IV. | **ກຳໄລຫລັງຫັກອາກອນ** | | 13,419,937,010 | (2,876,022,100) |

____________________
ທ່ານ. ລູຈ້ຽນ
ຜູ້ອຳນວຍການ

____________________
ທ່ານ. ຈ່າງ ຕ້າຊ້ຽນ
ຫົວໜ້າຝ່າຍບັນຊີ

ນະຄອນຫຼວງວຽງຈັນ, ສປປ ລາວ

29 ມິນາ 2013

## ໃບສະຫລຸບຊັບສິນບັດ

ນະວັນທີ 31 ທັນວາ 2012

| ລ/ດ | ຊັບສິນ | ເອກະສານຊ້ອນທ້າຍ | 31 ທັນວາ 2012<br>ລ | 31 ທັນວາ 2011<br>ກີບ |
|---|---|---|---|---|
| **I** | **ເງິນສົດ ແລະ ເງິນຝາກຢູ່ທະນາຄານກາງ "ທຫລ"** | | **198,642,285,395** | **156,332,958,082** |
| 1 | ເງິນສົດໃນກຳມື | 8 | 9,919,894,435 | 6,516,742,984 |
| 2 | ເງິນຝາກກະແສລາຍວັນ | 9 | 188,722,390,960 | 149,816,215,098 |
| **II** | **ໜີ້ຕ້ອງຮັບຈາກທະນາຄານອື່ນ** | | **913,441,864,652** | **166,467,878,629** |
| 1 | ເງິນຝາກກະແສລາຍວັນ | | 204,889,421,391 | 166,467,878,629 |
| 2 | ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າສຸດທິ | | 708,552,443,261 | |
| **IV** | **ການລົງທຶນໃນຫລັກຊັບ** | **11** | **1,082,930,000,000** | **-** |
| 1 | ຫລັກຊັບທີ່ຖືໄວ້ລໍຖ້າຄົບກຳນົດ | | 1,082,930,000,000 | - |
| **V** | **ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ (ຫລັງຫັກເງິນແຮ)** | **12** | **222,220,892,767** | **-** |
| **VIII** | **ຊັບສິນບັດຄົງທີ່** | | **13,548,944,750** | **12,072,082,507** |
| 1 | ຊັບສິນບັດຄົງທີ່ບໍ່ມີຕົວຕົນ | | 35,463,261 | 44,384,841 |
| 2 | ຊັບສິນບັດຄົງທີ່ມີຕົວຕົນ | 13 | 13,513,481,489 | 12,027,697,666 |
| **X** | **ຊັບສິນອື່ນໆ** | | **27,108,413,117** | **11,348,917,218** |
| 1 | ດອກເບ້ຍຄ້າງຮັບ | | 18,041,947,572 | 15,733,884 |
| 2 | ຊັບສິນອື່ນໆ | 14 | 9,066,465,545 | 11,333,183,334 |
| | **ລວມຊັບສິນ** | | **2,457,892,400,681** | **346,221,836,436** |

# ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ -ສາຂານະຄອນຫລວງວຽງຈັນ

ໃບສະຫລຸບຊັບສິນບັດ (ຕໍ່)
ນະວັນທີ 31 ທັນວາ 2012

| ລ/ດ | ໜີ້ສິນ ແລະ ທຶນ | ເອກະສານຊ້ອນທ້າຍ | 31 ທັນວາ 2012 ກີບ | 31 ທັນວາ 2011 ກີບ |
|---|---|---|---|---|
| I | **ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນໆ** | 15 | **1,596,510,031,946** | **-** |
| | ເງິນຝາກກະແສລາຍວັນ | | 1,596,396,020,000 | - |
| 2 | ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນໆ | | 114,011,946 | - |
| II | **ໜີ້ຕ້ອງສົ່ງໃຫ້ລູກຄ້າ** | 16 | **586,169,373,482** | **107,916,900,009** |
| 1 | ເງິນຝາກກະແສລາຍວັນ | | 375,978,496,322 | 27,660,689,759 |
| 2 | ເງິນຝາກປະຈຳ | | 61,308,180,370 | 9,124,706,045 |
| 3 | ເງິນຝາກມີກຳນົດ | | 102,776,633,695 | 845,464,200 |
| 4 | ໜີ້ຕ້ອງສົ່ງອື່ນໆໃຫ້ລູກຄ້າ | | 46,106,063,095 | 70,286,040,005 |
| V | **ໜີ້ສິນອື່ນໆ** | | **20,045,414,290** | **1,210,958,527** |
| 1 | ດອກເບ້ຍຄ້າງຈ່າຍ | | 5,917,098,959 | 5,001,267 |
| 2 | ອາກອນຄ້າງຈ່າຍ | | 710,323,860 | 39,376,594 |
| 3 | ໜີ້ຕ້ອງສົ່ງອື່ນໆ | 17 | 13,417,991,471 | 1,166,580,666 |
| | **ລວມຍອດໜີ້ສິນ** | | **2,202,724,819,718** | **109,126,435,058** |
| VI | **ທຶນ ແລະ ຄັງສຳຮອງ** | | **255,167,580,963** | **237,093,977,900** |
| 1 | ທຶນຈົດທະບຽນຖອກແລ້ວ | 19 | 239,970,000,000 | 239,970,000,000 |
| 2 | ຄັງແຮຕາມລະບຽບການ | 20 | 1,054,391,491 | - |
| 3 | ຄັງແຮທົ່ວໄປສຳລັບກິດຈະກຳສິນເຊື່ອ | 12.2 | 4,653,666,053 | - |
| 4 | ກຳໄລສະສົມ | | 9,489,523,419 | (2,876,022,100) |
| | **ລວມຍອດທຶນ** | | **255,167,580,963** | **237,093,977,900** |
| | **ລວມຍອດໜີ້ສິນ ແລະ ທຶນ** | | **2,457,892,400,681** | **346,221,836,436** |

# ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ - ສາຂານະຄອນຫລວງວຽງຈັນ

ໃບສະຫລຸບຊັບສິນບັດ (ຕໍ່)
ນະວັນທີ 31 ທັນວາ 2012

| *ລ/ດ* | *ລາຍການນອກໃບສະຫລຸບຊັບສິນບັດ* | *ເອກະສານຊ້ອນທ້າຍ* | *31 ທັນວາ 2012 ກີບ* | *31 ທັນວາ 2011 ກີບ* |
|---|---|---|---|---|
| I | **ຄຳໝັ້ນສັນຍາຄ້ຳປະກັນທີ່ໄດ້ໃຫ້** | | **48,249,274,712** | **-** |
| A | **ຄຳໝັ້ນສັນຍາທາງດ້ານການເງິນ** | | **37,752,300,000** | **-** |
| 2 | ຄຳໝັ້ນສັນຍາທາງດ້ານການເງິນທີ່ໄດ້ໃຫ້ແກ່ລູກຄ້າ | | 37,752,300,000 | **-** |
| B | **ຄຳໝັ້ນສັນຍາຄ້ຳປະກັນທີ່ໄດ້ໃຫ້** | | **10,496,974,712** | |
| 2 | ຄຳໝັ້ນສັນຍາຄ້ຳປະກັນທີ່ໄດ້ໃຫ້ແກ່ລູກຄ້າ | | 10,496,974,712 | - |
| | **ລວມຍອດຄຳໝັ້ນສັນຍາຄ້ຳປະກັນທີ່ໄດ້ໃຫ້** | | **48,249,274,712** | **-** |

_____________________________
ທ່ານ. ລູຈ້ຽນ
ຜູ້ອຳນວຍການ

_____________________________
ທ່ານ. ຈ່າງ ຕ້າຊ້ຽນ
ຫົວໜ້າຝ່າຍບັນຊີ

ນະຄອນຫຼວງວຽງຈັນ, ສປປ ລາວ
29 ມີນາ 2013

## ໃບລາຍງານການປ່ຽນແປງຂອງທຶນ

ສຳລັບທ້າຍປີວັນທີ 31 ທັນວາ 2012

| | ທຶນຈົດທະບຽນ ຖອກແລ້ວ<br>*ກີບ* | ຄັງສະສົມຕາມ ລະບຽບການ<br>*ກີບ* | ຄັງແຮ ສຳລັບທຸລະ ກຳສິນເຊື່ອ<br>*ກີບ* | ກຳໄລສະ ສົມ<br>*ກີບ* | *ລວມຍອດ*<br>*ກີບ* |
|---|---|---|---|---|---|
| **ຍອດເຫລືອ ນະວັນທີ 31 ທັນວາ 2011** | **239,970,000,000** | **-** | **-** | **(2,876,022,100)** | **237,093,977,900** |
| ກຳໄລສຸດທິພາຍໃນປີ | - | - | - | 13,419,937,010 | 13,419,937,010 |
| ຫັກຄັງແຮເຂົ້າເປັນລາຍຈ່າຍພາຍໃນປີ | - | 1,054,391,491 | - | 1,054,391,491 | 4,653,666,132 |
| ສ່ວນຜິດດ່ຽງຂອງການແລກປ່ຽນເງິນຕາຕ່າງປະເທດ | - | - | 4,675,045,352 | - | (21,379,299) |
| | | - | (21,379,299) | - | - |
| **ຍອດເຫຼືອນະວັນທີ 31 ທັນວາ 2012** | **239,970,000,000** | **1,054,391,491** | **4,653,666,053** | **9,489,523,419** | **255,167,580,963** |

ທ່ານ. ລູຈ້ຽນ
ຜູ້ອຳນວຍການ
ນະຄອນຫຼວງວຽງຈັນ, ສປປ ລາວ
29 ມິນາ 2013

ທ່ານ. ຈ່າງ ຕ້າຊ້ຽນ
ຫົວໜ້າຝ່າຍບັນຊີ

**ໃບລາຍງານກະແສເງິນສົດ**
ສຳລັບທ້າຍປີວັນທີ 31 ທັນວາ 2012

| | *ເອກະສານຊ້ອນທ້າຍ* | *2012*<br>*ກີບ* | *ສຳລັບໄລຍະເວລາແຕ່ວັນທີ 25 ສິງຫາ ວັນທີ 31 ທັນວາ 2011*<br>*ກີບ* |
|---|---|---|---|
| **ກຳໄລສຸດທິຫລັງອາກອນ** | | **13,419,937,010** | **(2,876,022,100)** |
| *ດັດແກ້ສຳລັບ* | | - | - |
| ລາຍຈ່າຍອາກອນກຳໄລຄ້າງຈ່າຍ | | - | 1,423,478 |
| ລາຍຈ່າຍຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມ | | 1,869,582,528 | 103,888,080 |
| ລາຍຈ່າຍຄັງແຮສຳລັບໜີ້ເສຍ | 12.2 | 4,653,666,053 | - |
| **ກະແສເງິນສົດຈາກກຳໄລຈາກການດຳເນີນງານ ກ່ອນການປ່ຽນແປງຂອງຊັບສິນ ແລະ ໜີ້ສິນ** | | **19,943,185,591** | **(2,770,710,542)** |
| (ເພີ່ມຂຶ້ນ)/ຫຼຸດລົງຂອງຊັບສິນຈາກການດຳເນີນງານ | | | |
| ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ | 12.2 | (930,773,336,028) | - |
| ຊັບສິນທາງດ້ານການເງິນອື່ນໆ | 11 | (1,082,930,000,000) | - |
| ລາຍຮັບດອກເບ້ຍຄ້າງຮັບ | | (18,026,213,688) | (15,733,884) |
| ຊັບສິນອື່ນໆ | | 5,799,286,554 | (11,377,791,214) |
| (ເພີ່ມຂຶ້ນ)/ຫຼຸດລົງຂອງໜີ້ສິນຈາກການດຳເນີນງານ | | | |
| ເງິນຝາກ ແລະ ເງິນກູ້ຢືມ ຈາກທະນາຄານອື່ນ | 15 | 1,596,510,031,946 | - |
| ເງິນຝາກຂອງລູກຄ້າ ແລະໜີ້ຕ້ອງສົ່ງອື່ນໆ ຂອງລູກຄ້ | | 478,252,473,473 | 107,916,900,009 |
| ອາກອນຖືກຈ່າຍພາຍໃນປີ | | (3,532,568,765) | - |
| ອາກອນກຳໄລຖອກແລ້ວພາຍໃນປີ | | 5,912,097,692 | 5,001,267 |
| ໜີ້ສິນອື່ນໆ | | 12,922,358,071 | 1,204,533,782 |
| **ກະແສເງິນສົດສຸດທິຈາກກິດຈະກຳການດຳເນີນງານ** | | **84,077,314,846** | **94,962,199,418** |
| **ການເຄື່ອນໄຫວທາງດ້ານການລົງທຶນ** | | | |
| ການຊື້ຊັບສິນບັດ ແລະ ອຸປະກອນ | | (3,346,444,771) | (12,131,362,707) |
| **ກະແສເງິນສົດສຸດທິໃຊ້ເຂົ້າໃນການເຄື່ອນໄຫວ ທາງດ້ານການລົງທຶນ** | | **(3,346,444,771)** | **(12,131,362,707)** |

**ໃບລາຍງານກະແສເງິນສົດ**
ສຳລັບທ້າຍປີວັນທີ 31 ທັນວາ 2012

| | *ເອກະສານ ຊ້ອນທ້າຍ* | *2012*<br>*ກີບ* | *ສຳລັບໄລຍະເວລາແຕ່ ວັນທີ 25 ສິງຫາ ວັນທີ 31 ທັນວາ 2011*<br>*ກີບ* |
|---|---|---|---|
| **ການເຄື່ອນໄຫວທາງດ້ານການເງິນ** | | | |
| ທຶນຈົດທະບຽນຖືກເພີ່ມພາຍໃນປີ | | - | 239,970,000,000 |
| **ກະແສເງິນສົດສຸດທິ ໃຊ້ເຂົ້າໃນການເຄື່ອນໄຫວທາງດ້ານການເງິນ** | | **-** | **239,970,000,000** |
| **ການເພີ່ມຂຶ້ນສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດ** | | **80,730,870,075** | **322,800,836,711** |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ** | **21** | **322,800,836,711** | **-** |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ** | **21** | **403,531,706,786** | **322,800,836,711** |

ທ່ານ. ລູຈ້ຽນ
ຜູ້ອຳນວຍການ

ທ່ານ. ຈ່າງ ຕ້າຊ້ຽນ
ຫົວໜ້າຝ່າຍບັນຊີ

ນະຄອນຫຼວງວຽງຈັນ, ສປປ ລາວ

29 ມິຖຸນາ 2013

ເອກະສານຊ້ອນທ້າຍບົດລາຍງານການເງິນ
ສໍາລັບທ້າຍປີ ວັນທີ 31 ທັນວາ 2012

## 1. ຂໍ້ມູນກ່ຽວກັບທະນາຄານ

ທະນາຄານ ອຸດສາຫະກໍາ ແລະ ການຄ້າຈີນ ຈໍາກັດ - ສາຂານະຄອນຫລວງວຽງຈັນ (ຕໍ່ໄປນີ້ເອີ້ນວ່າ "ສາຂາ") ແມ່ນສາຂາທະນາຄານອຸດສາຫະກໍາ ແລະ ການຄ້າຈີນ ເຊິ່ງສ້າງຕັ້ງຢູ່ໃນ ສປປ ລາວ.

*ການສ້າງຕັ້ງ ແລະ ການດໍາເນີນງານ.*

ສາຂານະຄອນຫລວງວຽງຈັນ ເປັນສາຂາໜຶ່ງຂອງທະນາຄານທີ່ດໍາເນີນງານຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ") ພາຍໃຕ້ໃບຖະບຽນທຸລະກິດທະນາຄານ ເລກທີ 16/ທຫລ ອອກໃຫ້ໂດຍທະນາຄານແຫ່ງ ສປປ ລາວ ("ທຫລ") ໃນວັນທີ 25 ສິງຫາ 2011 ແລະ ຖະບຽນທຸລະກິດທະນາຄານ ສະບັບປັບປຸງ ຢູ່ໃນເດືອນ ກຸມພາ 2012.

ການເຄື່ອນໄຫວຕົ້ນຕໍຂອງສາຂາແມ່ນ ການບໍລິການທາງດ້ານການທະນາຄານ ແລະ ການເງິນໃນ ສປປ ລາວ.

***ທຶນຈົດຖະບຽນທີ່ຖອກແລ້ວ***

ທຶນຈົດທະບຽນຂອງທະນາຄານແມ່ນ 30 ລ້ານໂດລາ ("ໂດລາ"). ທຶນຈົດທະບຽນທີ່ໄດ້ຖອກແລ້ວໃນວັນທີ 31 ທັນວາ 2012 ແມ່ນ 30 ລ້ານໂດລາ, ທຽບເທົ່າກີບ 239,970 ລ້ານກີບ (ທຶນຈົດທະບຽນທີ່ຖອກແລ້ວໃນວັນ 31 ທັນວາ 2011 ແມ່ນ 30 ລ້ານໂດລາ, ທຽບເທົ່າລ້ານກີບ 239,970).

***ຄະນະບໍລິຫານ***

ຄະນະບໍລິຫານພາຍໃນປີຈົນເຖິງມື້ອອກບົດລາຍງານສະບັບນີ້ມີດັ່ງນີ້:

| *ຊື່* | *ຕໍາແໜ່ງ* | *ວັນທີແຕ່ງຕັ້ງ* |
|---|---|---|
| ທ່ານ. ລູ ຈ້ຽນ | ຜູ້ອໍານວຍການ | ຖືກແຕ່ງຕັ້ງໃນວັນທີ 28 ພະຈິກ 2011 |
| ທ່ານ. ເສິນ ອີງຈີ້ | ຮອງຜູ້ອໍານວຍການ | ຖືກແຕ່ງຕັ້ງໃນວັນທີ 25 ຕຸລາ 2012 |

***ທີ່ຕັ້ງ***

ທະນາຄານຕັ້ງຢູ່ຖະໜົນ ລ້ານຊ້າງ, ເຮືອນເລກທີ. 12, ບ້ານ ຫັດສະດີໃຕ້, ເມືອງຈັນທະບູລີ, ນະຄອນຫລວງວຽງຈັນ, ສປປ ລາວ.

***ພະນັກງານ***

ພະນັກງານທັງໝົດຂອງທະນາຄານ ອຸດສາຫະກໍາ ແລະ ການຄ້າຈີນຈໍາກັດ - ສາຂານະຄອນຫລວງວຽງຈັນ ນະວັນທີ 31 ທັນວາ 2012 ແມ່ນ 38 ຄົນ (31 ທັນວາ 2011 % 19 ຄົນ).

## 2. ນະໂຍບາຍທາງການບັນຊີທີ່ສຳຄັນ

ນະໂຍບາຍທາງການບັນຊີທີ່ສຳຄັນເຊິ່ງໄດ້ນຳໃຊ້ເຂົ້າໃນການກະກຽມບົດລາຍງານການເງິນສະບັບນີ້ ມີດັ່ງລຸ່ມນີ້:

### *2.1. ບົດລາຍງານທີ່ສອດຄອງກັບກົດໝາຍວ່າດ້ວຍການບັນຊີ ຂອງ ສປປ ລາວ ແລະ ບັນດາກົດລະບຽບອື່ນໆ ທີ່ອອກໂດຍ ທະນາຄານແຫ່ງ ສປປ ລາວ*

ຄະນະຜູ້ບໍລິຫານຂອງສາຂາ ໄດ້ຢັ້ງຢືນວ່າບົດລາຍງານການຖານະການເງິນແມ່ນໄດ້ຖືກກະກຽມໃຫ້ສອດຄ່ອງກັບກົດໝາຍວ່າດວ້ຍການບັນຊີ ຂອງ ສປປ ລາວ ແລະ ບັນດາກົດລະບຽບອື່ນໆ ທີ່ອອກໂດຍທະນາຄນແຫ່ງ ສປປ ລາວ.

### *2.2 ພື້ນຖານ ຂອງ ການກະກຽມ*

ສາຂາບັນທຶກບັນຊີເປັນເງິນກີບ ແລະ ໄດ້ກະກຽມບົດລາຍງານການເງິນເປັນຫົວໜ່ວຍລ້ານກີບ (“ລ້ານກີບ”) ໂດຍສອດຄ່ອງກັບດຳລັດເລກທີ 02/ນຍ ຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ລົງວັນທີ 22 ມີນາ 2000 ວ່າດ້ວຍລະບົບການບັນຊີທີ່ນຳໃຊ້ສຳລັບທະນາຄານແຫ່ງ ສປປ ລາວ ແລະ ສະຖາບັນການເງິນອື່ນໆ.

ບົດລາຍງານການເງິນສະບັບນີ້ໄດ້ຖືກກະກຽມໂດຍນຳໃຊ້ ຫລັກການບັນຊີ, ຂັ້ນຕອນ ແລະ ການລາຍງານທາງການບັນຊີທີ່ຖືກຍອມຮັບໃນ ສປປ ລາວ. ດັ່ງນັ້ນ,ໃບລາຍງານຜົນໄດ້ຮັບ,ໃບສະຫຼຸບຊັບສິນບັດ,ໃບລາຍງານການປ່ຽນແປງຂອງທຶນ,ໃບລາຍງານກະແສເງິນສົດ ແລະ ເອກະສານຊ້ອນທ້າຍໃນບົດລາຍງານ ແມ່ນບໍ່ໄດ້ສ້າງຂຶ້ນສຳລັບທ່ານທີ່ບໍ່ໄດ້ຮັບຮູ້ຫຼັກການບັນຊີ, ຂັ້ນຕອນ ແລະ ການປະຕິບັດ ການບັນ ຊີ ຂອງລາວ. ສະນັ້ນ, ບົດລາຍງານສະບັບນີ້ບໍ່ມີຈຸດປະສົງເພື່ອນຳສະເໜີຖານະການເງິນ, ຜົນຂອງການດຳເນີນງານ ແລະ ກະແສເງິນສົດອີງຕາມຫຼັກການບັນຊີ ແລະ ການປະຕິບັດການບັນຊີທີ່ຍອມຮັບໄດ້ຂອງປະເທດອື່ນນອກຈາກ ສປປ ລາວ.

### *2.3. ປີການບັນຊີ*

ປີການບັນຊີ ຂອງສາຂາແມ່ນ ເລີ່ມຈາກວັນທີ 1 ມັງກອນ ແລະ ສິ້ນສຸດໃນວັນທີ 31 ທັນວາ.

### *2.4. ການຮັບຮູ້ລາຍຮັບ ແລະ ລາຍຈ່າຍດອກເບ້ຍ*

ລາຍຮັບ ແລະ ລາຍຈ່າຍດອກເບ້ຍແມ່ນໄດ້ຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບໂດຍອີງຕາມຫຼັກການບັນຊີແບບຄ້າງຮັບຄ້າງຈ່າຍທີ່ນຳໃຊ້ວິທີຄິດໄລ່ແບບສະເໝີຕົວແລະອັດຕາດອກເບ້ຍຕາມທີ່ໄດ້ກຳນົດຢູ່ໃນສັນຍາເງິນກູ້/ເງິນຝາກກັບລູກຄ້າ.

ການຮັບຮູ້ລາຍຮັບດອກເບ້ຍຄ້າງຮັບຈະຖືກລະງັບ ກໍ່ຕໍ່ເມື່ອເງິນກູ້ໄດ້ກາຍເປັນເງິນກູ້ທີ່ບໍ່ເກີດດອກອອກຜົນ ຫຼື ເມື່ອຄະນະບໍລິຫານເຊື່ອວ່າຜູ້ກູ້ຢືມບໍ່ມີຄວາມສາມາດຊຳລະດອກເບ້ຍ ແລະ ຕົ້ນທຶນໄດ້. ລາຍຮັບດອກເບ້ຍຂອງເງິນກູ້ດັ່ງກ່າວຈະຖືກບັນທຶກໃນໃບລາຍງານຜົນໄດ້ຮັບ ກໍ່ຕໍ່ເມື່ອໄດ້ຮັບດອກເບ້ຍຕົວຈິງເທົ່ານັ້ນ.

**2. ນະໂຍບາຍທາງການບັນຊີທີ່ສຳຄັນ (ຕໍ່)**

***2.5. ການຮັບຮູ້ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ***

ຄ່າທຳນຽມແລະຄ່າບໍລິການປະກອບດ້ວຍຄ່າທຳນຽມທີ່ໄດ້ຮັບຈາກການໂອນເງິນ(ລວມມີການຊຳລະສະສາງທຸລະກິດ, ຄ່າທຳນຽມເກີດຈາກການເຄື່ອນໄຫວແລກປ່ຽນເງິນຕາຕ່າງປະເທດ, ຄ່າທຳນຽມເກີດຈາກການອອກໜັງສື ຄ້ຳປະກັນທາງການເງິນ).

ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການແມ່ນຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບບົນຫລັກການເງິນສົດ.

***2.6. ເງິນສົດ ແລະ ທຽບເທົ່າເງິນສົດ***

ເງິນສົດ ແລະ ທຽບເທົ່າເງິນສົດແມ່ນລວມມີເງິນສົດ ແລະ ການລົງທຶນໄລຍະສັ້ນທີ່ມີສະພາບຄ່ອງສູງ ໂດຍມີອາຍຸຄົບກຳນົດຕ່ຳກວ່າ 30 ວັນ ເຊິ່ງພ້ອມທີ່ຈະປ່ຽນເປັນເງິນສົດໄດ້ ແລະ ບັນຊີໜີ້ຕ້ອງຮັບຈາກທະນາຄານອື່ນທີ່ມີອາຍຸ ຄົບກຳນົດຕ່ຳກວ່າ 30 ວັນ.

***2.7. ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ***

ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າແມ່ນຖືກຮັບຮູ້ຕາມຕົ້ນທຶນ ແລະ ສະແດງຍອດເຫລືອທ້າຍລົບໃຫ້ຄັງແຮສຳລັບເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ ນະວັນທີ 31 ທັນວາ 2012.

***2.8. ຄັງແຮເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ***

ອີງຕາມຂໍ້ກຳນົດເລກທີ 324/ທຫລ (ທະນາຄານແຫ່ງ ສປປລາວ 324) ລົງວັນທີ19 ເມສາ 2011, ສາຂາ ຕ້ອງໄດ້ຈັດຊັ້ນເງິນກູ້ ແລະ ສ້າງຄັງແຮສຳລັບໜີ້ສູນ, ດັ່ງນັ້ນ, ເງິນກູ້ແມ່ນຖືກຈັດຊັ້ນເປັນເງິນກູ້ທີ່ເກີດ ດອກອອກຜົນ ຫລື ເງິນກູ້ທີ່ ບໍ່ເກີດດອກອອກຜົນ ອີງຕາມສະຖານະພາບການຊຳລະເງິນທີ່ຍັງຄົງຄ້າງ ແລະ ປັດໃຈທາງດ້ານຄຸນນະພາບອື່ນໆ. ເງິນກູ້ຖືກຈັດຊັ້ນເປັນເງິນກູ້ປົກກະຕິ ຫຼື ຕິດຕາມພິເສດ ແມ່ນຈະຖືກພິຈາລະນາເປັນເງິນກູ້ທີ່ເກີດດອກອອກຜົນ, ເງິນກູ້ທີ່ຖືກຈັດຊັ້ນເປັນ ຕ່ຳກ່ວາມາດຕະຖານ ຫລື ໜີ້ສົງໃສ ຫລື ໜີ້ສູນ ແມ່ນຈະຖືກພິຈາລະນາເປັນເງິນກູ້ທີ່ບໍ່ເກີດດອກອອກຜົນ.

## 2. ນະໂຍບາຍທາງການບັນຊີທີ່ສຳຄັນ (ຕໍ່)

### *2.8. ຄັງແຮເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ* (ຕໍ່)

ອີງຕາມຂໍ້ກຳນົດເລກທີ 324/ທຫລ ຄັງແຮສະເພາະສຳລັບເງິນກູ້ຂອງລູກຄ້າແມ່ນໄດ້ຖືກກຳນົດໂດຍການຄິດໄລ່ເອົາຍອດເຫລືອຄ້າງຊຳລະເງິນກູ້ແຕ່ລະລາຍການຄູນໃຫ້ອັດຕາຄັງແຮທີ່ເໝາະສຳລັບການຈັດຊັ້ນເງິນກູ້ນັ້ນໆຄືດັ່ງລຸ່ມນີ້:

| *ກຸ່ມ* | *ການຈັດຊັ້ນໜີ້* | *ອັດຕາຄັງແຮສະເພາະ* |
|---|---|---|
| 1 | ປົກກະຕິ | 0% |
| 2 | ສັງເກດການ ຫຼື ຕິດຕາມພິເສດ | 3% |
| 3 | *ຕໍ່າກ່ວາມາດຕະຖານ* | 20% |
| 4 | *ໜີ້ສົງໃສ* | 50% |
| 5 | *ໜີ້ສູນ* | 100% |

ສ່ວນປ່ຽນແປງຂອງຄັງແຮສະເພາະດັ່ງກາວແມ່ນຈະໄດ້ຖືກບັນທຶກຢູ່ໃນໃບລາຍງານຜົນໄດ້ຮັບເປັນ*"ເພີ່ມເຂົ້າ/(ເກັບຄືນ) ຄັງແຮສຸດທິສຳຫລັບເງິນປ່ອຍກູ້ໃຫ້ລູກຄ້າ"*.ຄັງແຮສະເພາະສະສົມແມ່ນຈະຖືກບັນທຶກລົງໃນໃບສະຫລຸບຊັບສົມບັດໃນ *"ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ (ຫຼັງຫັກເງິນແຮ)"*.

ລາຍລະອຽດກ່ຽວກັບການຈັດຊັ້ນໜີ້ ແລະ ຄັງແຮສະເພາະ ແລະ ຈຳນວນຄ່າເສື່ອມຕົວຈິງທີ່ບັນທຶກໂດຍສາຂານະວັນ 31 ທັນວາ 2012 ແມ່ນໄດ້ລະບຸຢູ່ໃນເອກະສານຊ້ອນທ້າຍ 12.

### *2.9. ຄັງແຮທົ່ວໄປສຳລັບວຽກງານສິນເຊື່ອ*

ອີງຕາມຂໍ້ກຳນົດເລກທີ 324/ທຫລ, ຄັງແຮທົ່ວໄປແມ່ນຖືກສ້າງຂື້ນສຳລັບວຽກງານສິນເຊື່ອ ທັງກັບ ເງິນປ່ອຍກູ້ໃຫ້ທະນາຄານອື່ນ ແລະ ປ່ອຍກູ້ໃຫ້ລູກຄ້າເຊິ່ງຍັງບໍ່ທັນໄດ້ຖືກຈຳແນກໂດຍຂັ້ນຕອນການຈັດຊັ້ນໜີ້ ແລະ ຄັງແຮສະເພາະກໍ່ເຊັ່ນດຽວກັນໃນກໍລະນີທີ່ມີຄວາມຫຍຸ້ງຍາກທາງດ້ານການເງິນຂອງສາຂາ ອັນເນື່ອງມາຈາກຄຸນນະພາບເງິນກູ້ຍັງບໍ່ສູງເທົ່າທີ່ຄວນ. ດັ່ງນັ້ນ, ສາຂາຕອ້ງໄດ້ສ້າງຄັງແຮ ທົ່ວໄປການສຳລັບການ ສູນເສຍເງິນກູ້ດ້ວຍອັດຕາ 3.00% ຂອງຍອດເງິນກູ້ຕິດຕາມພິເສດຕາມນີ້ ສ້າງໃບສະຫລຸບຊັບສົມບັດ ແລະ ຕ້ອງສ້າງຄັງແຮທົ່ວໄປສຳລັບເງິນກູ້ປົກກະຕິໂດຍອີງຕາມການແຈ້ງການ ຂອງ ທະນາຄານ ແຫ່ງສປປ ລາວ ໃນແຕ່ ລະໄລຍະ. ສຳລັບທ້າຍປີ 31 ທັນວາ 2012, ອັດຕາຄັງແຮທົ່ວໄປສຳລັບເງິນກູ້ປົກກະຕິແມ່ນ 0,5% ອີງຕາມໃບແຈ້ງ ການເລກທີ 242/ທຫລ ອອກໂດຍທະນາຄານແຫ່ງສປປ ລາວໃນວັນທີ 2 ເມສາ 2011.

**2. ນະໂຍບາຍທາງການບັນຊີທີ່ສຳຄັນ (ຕໍ່)**

***2.9. ຄັງແຮທົ່ວໄປສຳລັບວຽກງານສິນເຊື່ອ* (ຕໍ່)**

ສາຂາໄດ້ນຳໃຊ້ອັດຕາ 0.50% ແລະ 3% ເພື່ອສ້າງຄັງແຮໃນສຳລັບເງິນກູ້ປົກກະຕິ ແລະ ເງິນກູ້ຕິດຕາມພິເສດ ສຳລັບທ້າຍປີ 31 ທັນວາ 2012.

ອີງຕາມກົດລະບຽບບັນຊີທີ່ກ່ຽວຂ້ອງເຊິ່ງວາງອອກໂດຍທະນາຄານແຫ່ງ ສປປ ລາວ, ສ່ວນປ່ຽນແປງຂອງຄັງແຮທົ່ວໄປສຳລັບກິດຈະກຳສິນເຊື່ອ ແມ່ນຈະບັນທຶກລົງໃນໃບລາຍງານຜົນໄດ້ຮັບເປັນ*"ລາຍຈ່າຍທົ່ວໄປຈາກການດຳເນີນງານອື່ນໆ"ສຳລັບລາຍຈ່າຍຄັງແຮທົ່ວໄປ*, ແລະ *"ລາຍຮັບຈາກການດຳເນີນງານອື່ນໆ"*, ສຳລັບການເກັບຄືນລາຍຈ່າຍຄັງແຮທົ່ວໄປແລະຄັງສຳຮອງຄັງແຮທົ່ວໄປ ແມ່ນຖືກບັນທຶກຢູ່ໃນໃບສະຫລຸບຊັບສິນບັດໃນ*"ຄັງແຮທົ່ວໄປສຳລັບກິດຈະກຳສິນເຊື່ອ"* ພາຍໃຕ້ສ່ວນຂອງທຶນ ແລະ ຄັງສຳຮອງຂອງສາຂາ.

ລາຍລະອຽດສ່ວນປ່ຽນແປງຂອງຄັງແຮທົ່ວໄປສຳລັບກິດຈະກຳສິນເຊື່ອໄດ້ຖືກລະບຸຢູ່ໃນເອກະ ສານຊ້ອນທ້າຍ 12.

***2.10. ຊັບສິນບັດຄົງທີ່***

ຊັບສິນບັດຄົງທີ່ລວມມີຊັບສິນບັດຄົງທີ່ມີຕົວຕົນ, ບໍ່ມີຕົວຕົນ ແລະ ສິດນຳໃຊ້ທີ່ດິນ, ຊັບສິນບັດຄົງທີ່ມີຕົວຕົນປະກອບມີ ອາຄານ, ເຄື່ອງເຟີນີເຈີ້ ແລະ ເຄື່ອງຕົບແຕ່ງ, ເຄື່ອງໃຊ້ຫ້ອງການ, ພາຫານະ, ຊັບສິນບັດຄົງ ທີ່ບໍ່ມີຕົວຕົນປະກອບມີ ໂປແກຼມຄອມພິວເຕີ.

ຊັບສິນບັດຄົງທີ່ໄດ້ຖືກລາຍງານດ້ວຍຕົ້ນທຶນລົບໃຫ້ ຄ່າຫລຸ້ຍຫ້ຽນ ສະສົມ (ຖ້າມີ)

ຕົ້ນທຶນຂອງຊັບສິນປະກອບດ້ວຍມູນຄ່າຊື້ ບວກກັບຄ່າໃຊ້ຈ່າຍທີ່ກ່ຽວຂ້ອງທາງກົງອື່ນໆໃນການເຮັດໃຫ້ຊັບສິນຢູ່ໃນສະພາບທີ່ພ້ອມໃຊ້ງານ.

ຄ່າໃຊ້ຈ່າຍສຳລັບການຊື້ເພີ່ມເຕີມ, ການປັບປຸງ ແລະ ການຕໍ່ອາຍຸ ແມ່ນຈະຖືກຕີເປັນຕົ້ນທຶນ ແລະ ຄ່າໃຊ້ຈ່າຍສຳລັບການບຳລຸງຮັກສາ ແລະ ຄ່າສ້ອມແປງແມ່ນຈະຖືກບັນທຶກຢູ່ໃນໃບລາຍງານຜົນໄດ້ຮັບ.

ເມື່ອຊັບສິນບັດຖືກຂາຍຫລືໝົດອາຍຸ, ຕົ້ນທຶນ ແລະ ຄ່າຫລຸ້ຍຫ້ຽນສະສົມຈະຖືກສະສາງ ຈາກໃບສະຫລຸບຊັບສິນບັດ ແລະ ກຳໄລ ຫລື ຂາດທຶນທີ່ມາຈາກການຂາຍອອກທີ່ຖືກບັນທຶກຢູ່ໃນໃບລາຍງານຜົນໄດ້ຮັບ.

## 2. ນະໂຍບາຍທາງການບັນຊີທີ່ສຳຄັນ (ຕໍ່)

### *2.11. ຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມຂອງຊັບສິນບັດຄົງທີ່*

ຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມຂອງຊັບສິນບັດຄົງທີ່ ແມ່ນຖືກຄິດໄລ່ຕາມວິທີຄິດໄລ່ແບບສະເໝີຕົວ ໃນອັດຕາທີ່ກຳນົດໃຊ້ຕໍ່ອາຍຸການນຳໃຊ້ທີ່ຄາດຄະເນຂອງຊັບສິນບັດເຫຼົ່ານັ້ນ ອີງຕາມກົດໝາຍສ່ວຍສາອາກອນ ຂອງ ສປປ ລາວ ເລກທີ 001 ອອກໂດຍປະທານສະພາແຫ່ງຊາດ ວັນທີ 1 ມີນາ 2011, ອັດຕາໃຊ້ປະຈຳປີມີດັ່ງຕໍ່ໄປນີ້:

| | |
|---|---|
| ເຄື່ອງໃຊ້ຫ້ອງການ | 10% |
| ເຟີນີເຈີ ແລະ ເຄື່ອງຕົບແຕ່ງ | 10% |
| ອຸປະກອນຄອມພິວເຕີ | 10% |
| ພາຫະນະ | 20% |
| ຊອບແວ | 20% |

### *2.12. ການເຄື່ອນໄຫວເງິນຕາຕ່າງປະເທດ*

ສາຂາໄດ້ປະຕິບັດລະບົບການບັນຊີ ແລະ ບັນທຶກທຸກການເຄື່ອນໄຫວຕາມສະກຸນເງິນເດີມ, ຊັບສິນ ແລະ ໜີ້ສິນທີ່ເປັນເງິນຕາຕ່າງປະເທດໃນທ້າຍປີແມ່ນໄດ້ຖືກຕີມູນຄ່າເປັນເງິນກີບຕາມ ອັດຕາແລກປ່ຽນໃນມື້ສ້າງໃບສະຫຼຸບຊັບສິນບັດ.(ລາຍລະອຽດອັດຕາແລກປ່ຽນເງິນຕາຕ່າງປະເທດທຽບໃສ່ເງິນກີບໃນວັນທີ 31 ທັນວາ 2011 ແລະ 31 ທັນວາ 2012 ໄດ້ສະແດງຢູ່ຂ້າງລຸ່ມນີ້). ລາຍຮັບ ແລະ ລາຍຈ່າຍເກີດຈາກການ ແລກປ່ຽນເງິນຕາຕ່າງປະເທດພາຍໃນປີແມ່ນ ຖືກປ່ຽນເປັນເງິນກີບດ້ວຍອັດຕາແລກປ່ຽນໃນມື້ທີ່ມີການເຄື່ອນ ໄຫວເກີດຂື້ນ. ສ່ວນຜິດດ່ຽງເງິນຕາຕ່າງປະເທດທີ່ເກີດຈາກການຕີມູນຄ່າຊັບສິນແລະໜີ້ສິນໃນມື້ສ້າງໃບສະຫລຸບຊັບສິນບັດແມ່ນຖືກບັນທຶກເຂົ້າໃນໃບລາຍງານ ຜົນໄດ້ຮັບ.

| | *31 ທັນວາ 2012* | *31 ທັນວາ 2011* |
|---|---:|---:|
| | *ກີບ* | *ກີບ* |
| ໂດລາ ສະຫະລັດ (“ໂດລາ”) | 7,963 | 8,007 |
| ບາດໄທ (“ບາດ”) | 260.15 | 251.75 |
| ຢູໂຣ (“ຢູ ໂຣ”) | 1,258.41 | 1,233 |

### *2.13. ອາກອນ*

ການສ້າງຄັງແຮສຳລັບອາກອນໃນປີ, ອີງຕາມກົດໝາຍອາກອນສະບັບປັບປຸງ ເລກທີ 01 ລົງວັນທີ 1 ມີນາ 2011 ເຊິ່ງມີຜົນບັງຄັບໃຊ້ ຕັ້ງແຕ່ວັນທີ 1 ມັງກອນ 2012 ທະນາຄານ ມີພັນທະຕ້ອງເສຍອາກອນໃນອັດຕາ 28% ຂອງກຳໄລກ່ອນອາກອນ (2011: ທະນາຄານມີພັນທະຕ້ອງເສຍອາກອນໃນອັດຕາ 35% ຂອງກຳໄລກ່ອນອາກອນ), ອາກອນກຳໄລແມ່ນໜີ້ຕ້ອງສົ່ງເຊິ່ງຖືກ ຄິດໄລ່ເປັນອກອນຕ່ຳສຸດໃນອັດຕາ 1.00% ຂອງລາຍຮັບທັງໝົດ (”ອັດຕາ 1.00%”) ຫລື 28% (2011: 35%) ຂອງກຳໄລທີ່ຕ້ອງເສຍອາກອນຂອງທະນາຄານເຊິ່ງໄດ້ລາຍງານອີງຕາມລະບົບການບັນຊີລາວ. ການມອບອາກອນຂອງທະຄານແມ່ນຕ້ອງໄດ້ຮັບການກວດກາໂດຍເຈົ້າໜ້າທີ່ສ່ວຍສາອາກອນ, ຍ້ອນວ່າການນຳໃຊ້ກົດໝາຍສ່ວຍສາອາກອນ ແລະ ລະບຽບການຕ່າງໆ ແມ່ນມີຫລາຍປະ

**2. ນະໂຍບາຍທາງການບັນຊີທີ່ສຳຄັນ (ຕໍ່)**

ເພດເຊິ່ງອາດຈະແປຄວາມໄດ້ເປັນຫລາຍຢ່າງ, ຈຳນວນທີ່ໄດ້ຖືກລາຍງານຢູ່ໃນ ບົດລາຍງານການເງິນອາດຈະມີການປ່ຽນແປງ ຂຶ້ນກັບການໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

***2.14. ຄັງແຮສະສົມ***

ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ ລົງວັນທີ 16 ມັງກອນ 2007, ບັນດາທະຄານທຸລະກິດ ແລະ ທະນາຄານຕ່າງປະເທດຕ້ອງໄດ້ແບ່ງຜົນກຳໄລສຸດທິເພື່ອນຳໄປສ້າງຄັງສຳຮອງຕາມລະບຽບການດັ່ງລຸ່ມນີ້:

- ຄັງສຳຮອງຕາມລະບຽບການ
- ຄັງຂະຫຍາຍທຸລະກິດ

ອີງຕາມກົດລະບຽບກ່ຽວກັບ ຄວາມພຽງພໍຂອງທຶນເລກທີ 01/ທຫລ ລົງວັນທີ 28 ສິງຫາ 2002 ໂດຍຜູ້ວ່າການທະນາຄານ ແຫລ່ງ ສປປ ລາວ, ບັນດາທະນາຄານທຸລະກິດ ແລະ ທະນາຄານສາຂາຕ່າງ ປະເທດແມ່ນຕ້ອງໄດ້ສ້າງຄັງສຳຮອງຕາມລະບຽບການໃນອັທດຕາຈາກ 5.00% ຫາ 10.00% ຂອງກຳໄລຫລັງ ອາກອນໂດຍຂຶ້ນກັບການຕັດສິນໃຈຂອງສະພາຜູ້ບໍລິຫານ.

**2.15 ຜົນປະໂຫຍດຂອງພະນັກງານ**

*ຜົນປະໂຫຍດພາຍຫລັງອອກການ*

ຜົນປະໂຫຍດພາຍຫລັງອອກການແມ່ນຈະຖືກຈ່າຍໃຫ້ພະນັກງານບຳນານຂອງສາຂາໂດຍກົມກອງທຶນສະຫວັດດີການສັງຄົມທີ່ຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ສາຂາ ຕ້ອງໄດ້ປະກອບສ່ວນເຂົ້າໃນຜົນປະໂຫຍດຂອງພະນັກງານຫລັງອອກການ ໂດຍການຈ່າຍຄ່າເບັຍປະກັນສັງຄົມໃຫ້ແກ່ຕົວແທນປະກັນ ສັງຄົມໃນອັດຕາ 5.00% ຂອງເງິນເດືອນພື້ນຖານຂອງພະນັກງານໃນແຕ່ລະເດືອນ, ສາຂາບໍ່ມີພັນທະອື່ນອີກທີ່ກ່ຽວຂ້ອງກັບຜົນປະໂຫຍດຫລັງອອກການຂອງພະນັກງານ.

*ຜົນປະໂຫຍດຈາກການຍົກເລີກສັນຍາ*

ສາຂາມີພັນທະ, ພາຍໃຕ້ກົດໝາຍແຮງງານໂດຍທົ່ວໄປ, ແມ່ນຈ່າຍເງິນຊົດເຊີຍໃຫ້ພະນັກງານຜູ້ທີ່ຖືກຍົກເລີກສັນຍາ ຍ້ອນກໍລະນີດັ່ງລຸ່ມນີ້:

- ເມື່ອພະນັກງານຂາດຄວາມຊຳນານໃນວິຊາສະເພາະ ຫລື ເມື່ອພະນັກງານບໍ່ມີສຸຂະພາບແຂງແຮງດັ່ງນັ້ນຈຶ່ງບໍ່ສາມາດເຮັດວຽກຕໍ່ໄດ້ຢ່າງເຕັມເມັດເຕັມໜ່ວຍ;
- ເມື່ອສາຂາຫາກໄດ້ພິຈາລານາວ່າມີຄວາມຈຳເປັນຈະຕ້ອງໄດ້ຫລຸດຈຳນວນພະນັກງານລົງ ເພື່ອປັບປຸງໂຄງສ້າງວຽກງານພາຍໃນໜ່ວຍງານ.

ສຳລັບການຍົກເລີກສັນຍາຈ້າງງານໃນຂົງເຂດທີ່ໄດ້ກ່າວມາຂ້າງເທິງນັ້ນ, ນາຍຈ້າງຕ້ອງຈ່າຍເງິນເບັຍລ້ຽງໃຫ້ພະນັກງານໂດຍອີງໃສ່ພື້ນຖານການຄິດໄລ່ 10% ຂອງເງິນເດືອນພື້ນຖານເດືອນສຸດທ້າຍຄູນໃຫ້ຈຳນວນເດືອນເຮັດວຽກນຳສາຂາສຳລັບ ຜູ້ທີ່ເຮັດວຽກຕ່ຳກວ່າ 3 ປີ. ສຳລັບຜູ້ທີ່ເຮັດວຽກເກີນ 3 ປີ ພື້ນຖານຄິດໄລ່ແມ່ນ 15% ຂອງເງິນເດືອນສຸດທ້າຍຄູນໃຫ້ຈຳນວນເດືອນເຮັດວຽກນຳສາຂາ. ນະວັນທີ 31 ທັນວາ 2011, ບໍ່ມີພະນັກງານຂອງສາຂາຖືກຍົກເລີກສັນຍາ ເນື່ອງມາຈາກເຫດຜົນທີ່ກ່າວໄວ້ຂ້າງເທິງ; ດັ່ງນັ້ນ, ສາຂາຈຶ່ງບໍ່ໄດ້ສ້າງຄັງແຮສຳລັບເງິນຊົດເຊີຍຈາກການຍົກເລີກສັນຍາໃນບົດລາຍງານການເງິນ

**3. ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນສຸດທິ**

| | *2012* | *ສຳລັບໄລຍະເວລາແຕ່ ວັນທີ 25 ສິງຫາ ວັນທີ 31 ທັນວາ 2011* |
|---|---|---|
| | *ກີບ* | *ກີບ* |
| **ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນສຸດທິ:** | | |
| ລາຍຮັບດອກເບ້ຍລະຫວ່າງທະນາຄານ | 33,398,357,646 | 17,523,457 |
| ລາຍຮັບດອກເບ້ຍຈາກການກູ້ຢືມ | 7,292,856,393 | - |
| ລາຍຮັບດອກເບ້ຍຈາກການລົງທຶນໃນຫລັກຊັບ | 29,458,322,470 | - |
| | **70,149,536,509** | **17,523,457** |
| **ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ:** | | |
| ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ ລະຫວ່າງທະນາຄານ | (23,630,275,834) | - |
| ລາຍຈ່າຍດອກເບ້ຍຈາກເງິນຝາກຂອງລູກຄ້າ | (3,452,800,456) | (5,009,374) |
| | **(27,083,076,290)** | **(5,009,374)** |
| **ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນສຸດທິ** | **43,066,460,219** | **12,514,083** |

## 4. ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການສຸດທິ

| | *2012* | *ສຳລັບໄລຍະເວລາແຕ່ ວັນທີ 25 ສິງຫາ ວັນທີ 31 ທັນວາ 2011* |
|---|---|---|
| | *ກີບ* | *ກີບ* |
| **ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການຈາກ** | | |
| ຄ່າທຳນຽມກ່ຽວກັບການດຳເນີນງານ ກັບລູກຄ້າ | 1,826,004,782 | 8,877,223 |
| ຄ່າທຳນຽມ ແລະ ຄ່າບໍລິການອື່ນໆ | 122,172,137 | - |
| | **1,948,176,919** | **8,877,223** |

**5. ເງິນເດືອນ ແລະ ລາຍຈ່າຍອື່ນໆກ່ຽວກັບພະນັກງານ**

| | *2012* | *ສຳລັບໄລຍະເວລາແຕ່ ວັນທີ 25 ສິງຫາ ວັນທີ 31 ທັນວາ 2011* |
|---|---|---|
| | *ກີບ* | *ກີບ* |
| ຄ່າແຮງງານ ແລະ ເງິນເດືອນ | 11,111,433,685 | 688,780,184 |
| ລາຍຈ່າຍອື່ນໆກ່ຽວກັບພະນັກງານ | 620,759,131 | - |
| | **11,732,192,816** | **688,780,184** |

**6. ລາຍຈ່າຍບໍລິຫານອື່ນໆ**

| | *2012* | *ສຳລັບໄລຍະເວລາ ແຕ່ວັນທີ 25 ສິງຫາ ວັນທີ 31 ທັນວາ 2011* |
|---|---|---|
| | *ກີບ* | *ກີບ* |
| ລາຍຈ່າຍຄ່າເຊົ່າຫ້ອງການ | 2,880,387,750 | 869,158,333 |
| ລາຍຈ່າຍຄ່ານ້ຳມັນ | 116,439,500 | 24,140,611 |
| ລາຍຈ່າຍຄ່າເຄື່ອງໃຊ້ຫ້ອງການ | 561,800,273 | 126,062,600 |
| ລາຍຈ່າຍໂຄສະນາ, ການຕະຫຼາດ ແລະ ການສົ່ງເສີມການຂາຍ | 1,048,195,257 | 258,348,860 |
| ລາຍຈ່າຍຄ່າໂທລະຄົມມະນາຄົມ | 394,941,924 | 116,728,179 |
| ລາຍຈ່າຍຄ່າສ້ອມແປງ ແລະ ບຳລຸງຮັກສາ | 55,205,273 | 29,139,536 |
| ລາຍຈ່າຍຄ່າໄຟຟ້າ ແລະ ນ້ຳປະປາ | 226,430,416 | 30,380,052 |
| ຄ່າທຳນຽມປະກັນໄພ | | 7,024,084 |
| ລາຍຈ່າຍຮັບແຂກ | 2,193,575,144 | 218,089,332 |
| ລາຍຈ່າຍຄ່າກວດສອບບັນຊີ | 82,846,400 | - |
| ຄ່າທຳນຽມສະຫວັດດີອື່ນໆ | 44,809,600 | - |
| ລາຍຈ່າຍອື່ນໆ | 1,537,521,919 | 133,064,080 |
| | **9,142,153,456** | **1,812,135,667** |

**7. ລາຍຈ່າຍໃນການດຳເນີນທຸລະກິດອື່ນໆ**

| | *31 ທັນວາ 2012* | *31 ທັນວາ 2011* |
|---|---|---|
| | *ກີບ* | *ກີບ* |
| ຄັງແຮທົ່ວໄປ (ເອກະສານຊ້ອນທ້າຍ 12) | 4,675,045,352 | - |
| ລາຍຈ່າຍທີ່ເກີດຂຶ້ນໃນລະບົບ | 173,062,522 | 33,568,333 |
| ອື່ນໆ | 53,268,918 | 1,982,010 |
| | **4,901,376,792** | **35,550,343** |

## 8. ເງິນສົດໃນກຳມື

| | *31 ທັນວາ 2012* | *31 ທັນວາ 2011* |
|---|---|---|
| | *ກີບ* | *ກີບ* |
| ເງິນສົດໃນກຳມືເປັນກີບ | 4,278,322,500 | 533,815,500 |
| ເງິນສົດໃນກຳມືເປັນຕາຕ່າງປະເທດ | 5,641,571,935 | 5,982,927,484 |
| | **9,919,894,435** | **6,516,742,984** |

## 9. ບັນຊີເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ

| | *31 ທັນວາ 2012* | *31 ທັນວາ 2011* |
|---|---|---|
| | *ກີບ* | *ກີບ* |
| ເງິນຝາກກະແສລາຍວັນ | 97,832,444,942 | 90,412,995,215 |
| ເງິນຝາກພາກບັງຄັບ | 31,486,726,135 | - |
| ເງິນຄ້ຳປະກັນທຶນຈົດທະບຽນ | 59,403,219,883 | 59,403,219,883 |
| | **188,722,390,960** | **149,816,215,098** |

ຍອດເຫລືອເງິນຝາກຢູ່ກັບທະນາຄານແຫ່ງ ສປປ ລາວ ທີ່ລວມເຖິງບັນຊີເພື່ອຊຳລະສະສາງ ແລະ ບັນຊີເງິນຝາກພາກບັງຄັບ. ເງິນຝາກດັ່ງກ່າວແມ່ນບໍ່ມີດອກເບ້ຍ.

ພາຍໃຕ້ຂໍ້ກຳນົດຂອງທະນາຄານ ແຫ່ງ ສປປ ລາວ. ສາຂາໄດ້ຖືກຮຽກຮ້ອງໃຫ້ຮັກສາຄັງແຮໄວ້ກັບທະນາຄານ ແຫ່ງ ສປປ ລາວ ໃນຮູບແບບເງິນຝາກພາກບັງຄັບ ເຊິ່ງຖືກຄິດໄລ່ໃນອັດຕາ 5.00% ແລະ 10.00% ໃນທຸກໆສອງອາທິດ, ( 2011: .00% ແລະ 10.00%) ຂອງ ລູກຄ້າເງິນຝາກທີ່ຮອດກຳນົດໜ້ອຍກວ່າ 12 ເດືອນ, ຫລັງຈາກຫລັກຍອດເຫລືອເງິນສົດໃນກຳມື, ໃນສະກຸນ ກີບ, ໂດລາ ແລະ ໄທບາດ, ຕາມລຳດັບ
ໃນຊ່ວງປີ 2012, ສາຂາໄດ້ມີເງິນຝາກພາກບັງຄັບເພື່ອສອດຄ່ອງກັບກົດລະບຽບຂອງ ທະນາຄານ ແຫ່ງ ສປປ ລາວ.

## 10. ໜີ້ຕ້ອງຮັບຈາກທະນາຄານອື່ນ

| | *31 ທັນວາ 2012* | *31 ທັນວາ 2011* |
|---|---|---|
| | *ກີບ* | *ກີບ* |
| ເງິນຝາກກະແສລາຍວັນ | | |
| ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ | | |
| - (ເອເຊຍ) ຮົງກົງ | 144,203,615,014 | 37,656,090,210 |
| ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ | | |
| - ສຳນັກງານໃຫຍ່ | 60,685,806,377 | 128,811,788,420 |
| | **204,889,421,391** | **166,467,878,629** |
| ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າສຸດທິ | | |
| ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ | | |
| - ພະນົມເປັນ | 199,075,000,000 | - |
| ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ | | |
| - ຕົງລິງ | 16,233,489,000 | - |
| ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ | | |
| - ຊູໂຈ້ | 493,243,954,261 | - |
| | **708,552,443,261** | **-** |
| | **913,441,864,652** | **166,467,878,629** |

ອັດຕາດອກເບ້ຍສຳລັບເງິນກູ້ໃຫ້ທະນາຄານອື່ນ ພາຍໃນປີມີດັ່ງລຸ່ມນີ້:

| | *2012* | *2011* |
|---|---|---|
| | *ອັດຕາດອກເບ້ຍ* | *ອັດຕາດອກເບ້ຍ* |
| | *% ຕໍ່ປີ* | *% ຕໍ່ປີ* |
| ເງິນກູ້ ແລະ ເງນິລ່ວງໜ້າໃນສະກຸນເງິນໂດລາ | 1.0% - 9.0% | |

*ໃຈ້ແຍກຕາມສະກຸນເງິນຢູ່ໃນບົດລາຍງານເງິນກູ້*

| | *31 ທັນວາ 2012* | *31 ທັນວາ 2011* |
|---|---|---|
| | *ກີບ* | *ກີບ* |
| ເງິນກູ້ ແລະ ເງິນລ່ວງໜ້າເປັນສະກຸນເງິນໂດລາ | 708,552,443,261 | |
| | **708,552,443,261** | |

## 11. ການລົງທຶນໃນຫຼັກຊັບ

| | *31 ທັນວາ 2012* | *31 ທັນວາ 2011* |
|---|---|---|
| | *ກີບ* | *ກີບ* |
| **ການຊື້ຂາຍຫຼັກຊັບ** | | |
| ຫລັກຊັບໜີ້ສິນ | | |
| - ພັນທະບັດອອກໂດຍທະນາຄານແຫ່ງ ສປປ ລາວ | 781,670,000,000 | - |
| - ພັນທະບັດທີ່ອອກໂດຍ ກະຊວງການເງິນ | 301,260,000,000 | - |
| | **1,082,930,000,000** | **-** |

### *11.1 ພັດທະບັດອອກໂດຍທະນາຄານແຫ່ງ ສປປ ລາວ*

ລາຍລະອຽດພັນທະບັດອອກໂດຍທະນາຄານ ແຫ່ງ ສປປ ລາວ ນະວັນທີ 31 ທັນວາ 2012 ມີດັ່ງລຸ່ມນີ້:

| *ກຳນົດ (ເດືອນ)* | *ວັນທີອອກ* | *ມູນຄ່າເດີມ* | *ສະກຸນເງິນ* | *ມູນຄ່າເດີມ (ທຽບເທົ່າກີບ)* | *ອັດຕາດອກເບ້ຍ ຕໍ່ປີ* |
|---|---|---|---|---|---|
| 12 | 21 ກຸມພາ 12 | 50,000,000,000 | ກີບ | 50,000,000,000 | 6.50% |
| 12 | 28 ສິງຫາ12 | 15,000,000,000 | ກີບ | 15,000,000,000 | 6.50% |
| 12 | 29 ພຶດສະພາ12 | 20,000,000 | ໂດລາ | 159,260,000,000 | 4.50% |
| 12 | 5 ມິຖຸນາ 12 | 20,000,000 | ໂດລາ | 159,260,000,000 | 4.50% |
| 12 | 12 ມິຖຸນາ 12 | 10,000,000 | ໂດລາ | 79,630,000,000 | 4.50% |
| 37 | 12 ກັນຍາ12 | 10,000,000 | ໂດລາ | 79,630,000,000 | 4.69% |
| 61 | 18 ທັນວາ12 | 10,000,000 | ໂດລາ | 79,630,000,000 | 5.01% |
| 61 | 25 ທັນວາ12 | 20,000,000 | ໂດລາ | 159,260,000,000 | 5.01% |
| | | | | **781,670,000,000** | |

### *11.2 ພັນທະບັດອອກໂດຍ ກະຊວງການເງິນ*

ລາຍລະອຽດພັນທະບັດອອກໂດຍ ກະຊວງການເງິນ ນະວັນທີ 31 ທັນວາ 2012 ມີດັ່ງລຸ່ມນີ້:

| *ກຳນົດ (ເດືອນ)* | *ວັນທີອອກ* | *ມູນຄ່າເດີມ* | *ສະກຸນເງິນ* | *ມູນຄ່າເດີມ (ທຽບເທົ່າກີບ)* | *ອັດຕາດອກເບ້ຍ ຕໍ່ປີ* |
|---|---|---|---|---|---|
| 12 | 24 ມັງກອນ12 | 79,000,000,000 | ກີບ | 79,000,000,000 | 8.50% |
| 12 | 16 ພຶດສະພາ12 | 48,000,000,000 | ກີບ | 48,000,000,000 | 8.50% |
| 12 | 30 ພຶດສະພາ12 | 15,000,000,000 | ກີບ | 15,000,000,000 | 8.50% |
| 12 | 16 ພຶດສະພາ12 | 20,000,000 | ໂດລາ | 159,260,000,000 | 4.50% |
| | | | | **301,260,000,000** | |

## 12. ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ, ຫັກເງິນແຮພິເສດ

| | *31 ທັນວາ 2012* *ກີບ* | *31 ທັນວາ 2011* *ກີບ* |
|---|---|---|
| ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ *(ເອກະສານຊ້ອນທ້າຍ 12.1)* | 222,220,892,767 | - |
| ລົບ: ເງິນແຮພິເສດ ສໍາລັບເງິນກູ້ໃຫ້ລູກຄ້າ *(ເອກະສານຊ້ອນທ້າຍ 12.2)* | - | - |
| | **222,220,892,767** | **-** |

### *12.1 ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ*

*ໃຈ້ແຍກຕາມສະກຸນເງິນ*

| | *31 ທັນວາ 2012* *ກີບ* | *31 ທັນວາ 2011* *ກີບ* |
|---|---|---|
| ເງິນກູ້ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າ ເປັນກີບ | 40,116,088 | - |
| ເງິນກູ້ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າ ເປັນ ໂດລາ | 222,180,776,679 | - |
| | **222,220,892,767** | **-** |

***ໃຈ້ແຍກຕາມຖານະເງິນກູ້***

| | *31 December 2012* *LAK* | *31 December 2011* *LAK* |
|---|---|---|
| ເງິນກກູ້ທີ່ເກີດດອກອອກຜົນ | 222,220,892,767 | |
| ເງິນກູ້ທີ່ບໍ່ເກີດດອກອອກຜົນ | | |
| | **222,220,892,767** | |

ອັດຕາດອກເບ້ຍສໍາລັບເງິນກູ້ທາງດ້ານການຄ້າພາຍໃນປີ ມີດັ່ງລຸ່ມນີ້:

| | *2012* *ອັດຕາດອກເບ້ຍ % ຕໍ່ປີ* | *2011* *ອັດຕາດອກເບ້ຍ % ຕໍ່ປີ* |
|---|---|---|
| ເງິນກູ້ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າ ເປັນກີບ | 10% - 15% | - |
| ເງິນກູ້ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າ ເປັນ ໂດລາ | 6% - 13% | - |

## 12. ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ, ຫັກເງິນແຮພິເສດ (ຕໍ່)

### *12.2 ຄັງແຮສຳລັບໜີ້ເສຍ*

ການເຄື່ອນໄຫວຄັງແຮໜີ້ເສຍຂອງທະນາຄານພາຍໃນປີ 2012 ມີດັ່ງລຸ່ມນີ້:

| | *ຄັງແຮສະເພາະ*<br>*ກີບ* | *ຄັງແຮທົ່ວໄປ*<br>*ກີບ* |
|---|---|---|
| **ຍອດເຫລືອນະວັນທີ 1 ມັງກອນ 2012** | | |
| ຄັງແຮທີ່ຫັກເປັນລາຍຈ່າຍພາຍໃນປີ | - | 4,675,045,352 |
| ສ່ວນຜິດດ່ຽງຈາກການແລກປ່ຽນ ເງິນຕາຕ່າງປະເທດ | - | (21,379,299) |
| **ຍອດເຫລືອນະວັນທີ 31 ທັນວາ 2012** | **-** | **4,653,666,053** |

ລາຍລະອຽດຂອງການຈັດຊັ້ນໜີ້ ແລະ ຄັງແຮ ຕາມຂໍ້ກຳນົດຂອງທະນາຄານແຫ່ງ ສປປ ລາວ ນະວັນທີ 31 ທັນວາ 2012 ມີດັ່ງລຸ່ມນີ້:

| *ການຈັດຊັ້ນໜີ້* | *ຍອດເຫລືອເງິນກູ້*<br>*ກີບ* | *ຄັງແຮພິເສດ*<br>*ກີບ* | *ຄັງແຮທົ່ວໄປ*<br>*ກີບ* | *ລວມຄັງແຮທັງໝົດ*<br>*ກີບ* |
|---|---|---|---|---|
| ເງິນກູ້ປົກກະຕິ (*) | 930,773,336,028 | - | 4,653,666,053 | 4,653,666,053 |
| *ເງິນກູ້ ລະ ເງິນລ່ວງໜ້າ ໃຫ້ລູກຄ້າ* | *222,220,892,767* | - | *1,111,056,564* | *1,111,056,564* |
| *ເງິນກູ້ສຸດທິໃຫ້ທະຄານ ອື່ນ* | *708,552,443,261* | | *3,542,609,489* | *3,542,609,489* |
| **ລວມທັງໝົດ** | **930,773,336,028** | **-** | **4,653,666,053** | **4,653,666,053** |

13. **ຊັບສິນບັດຄົງທີ່**

***ຊັບສິນບັດຄົງທີ່ມີຕົວຕົນ***

ການເຄື່ອນໄຫວຍອດເຫຼືອຂອງຊັບສິນບັດຄົງທີ່ມີຕົວຕົນສຳລັບທ້າຍປີ ວັນທີ 31 ທັນວາ 2012 ມີດັ່ງລຸ່ມນີ້:

| | *ອຸປະກອນຫ້ອງການ* | *ເຟີນິເຈີ & ຕົບແຕ່ງ* | *ອຸປະກອນຄວມພິວເຕີ & ຊອບແວ* | *ພາຫະນະ* | *ລວມ* |
|---|---|---|---|---|---|
| | *ກີບ* | *ກີບ* | *ກີບ* | *ກີບ* | *ກີບ* |
| **ຕົ້ນທຶນ:** | | | | | |
| ນະວັນທີ 1 ມັງກອນ 2012 | 41,896,000 | 10,361,077,500 | 1,728,389,207 | - | 12,131,362,707 |
| ຮັບເຂົ້າເພີ້ມ | 208,696,186 | | 289,150,735 | 2,848,597,850 | 3,346,444,771 |
| ນະວັນທີ 31 December 2012 | 250,592,186 | 10,361,077,500 | 2,017,539,942 | 2,848,597,850 | 15,477,807,478 |
| **ຫລຸ້ຍຫ້ຽນສະສົມ:** | | | | | |
| ນະວັນທີ 1 ມັງກອນ 2012 | 46,551 | 94,976,544 | 8,641,946 | - | 103,665,041 |
| ຄ່າຫລຸ້ຍຫ້ຽນພາຍໃນປີ 2012 | 23,271,535 | 1,036,107,756 | 367,661,760 | 433,619,897 | 1,860,660,948 |
| ນະວັນທີ 31 ທັນວາ 2012 | 23,318,086 | 1,131,084,300 | 376,303,706 | 433,619,897 | 1,964,325,989 |
| **ມູນຄ່າສຸດທິ:** | | | | | |
| ນະວັນທີ 1 ມັງກອນ 2012 | 41,849,449 | 10,266,100,956 | 1,719,747,261 | - | 12,027,697,666 |
| ນະວັນທີ 31 ທັນວາ 2012 | 227,274,100 | 9,229,993,200 | 1,641,236,236 | 2,414,977,953 | 13,513,481,489 |

**13. ຊັບສິນບັດຄົງທີ່** (ຕໍ່)

***ຊັບສິນບັດຄົງທີ່ມີຕົວຕົນ***

ການເຄື່ອນໄຫວຍອດເຫຼືອຂອງຊັບສິນບັດຄົງທີ່ມີຕົວຕົນສຳລັບທ້າຍປີ ວັນທີ 31 ທັນວາ 2012 ມີດັ່ງລຸ່ມນີ້:

| | *ຄອມພິວເຕີ ຊອບແວ* |
|---|---|
| | *LAK* |
| **ຕົ້ນທຶນ:** | |
| ນະວັນທີ 1 ມັງກອນ 2012 | 44,607,880 |
| ຮັບເຂົ້າເພີ້ມ | - |
| ນະວັນທີ 31 ທັນວາ 2012 | 44,607,880 |
| **ຫລຸ້ຍຫ້ຽນສະສົມ:** | |
| ນະວັນທີ 1 ມັງກອນ 2012 | 223,039 |
| ຄ່າຫລຸ້ຍຫ້ຽນພາຍໃນປີ 2012 | 8,921,580 |
| ນະວັນທີ 31 ທັນວາ 2012 | 9,144,619 |
| **ມູນຄ່າສຸດທິ:** | |
| ນະວັນທີ 1 ມັງກອນ 2012 | 44,384,841 |
| ນະວັນທີ 31 ທັນວາ 2012 | 35,463,261 |

## 14. ຊັບສິນອື່ນໆ

| | *31 ທັນວາ 2012* | *31 ທັນວາ 2011* |
|---|---|---|
| | *ກີບ* | *ກີບ* |
| ລາຍຈ່າຍລ່ວງໜ້າຄ່າທຳນຽມຄ່າເຊົ່າອາຄານ | 8,758,441,667 | 11,165,341,667 |
| ລາຍຈ່າຍລ່ວງໜ້າດອກເບ້ຍຄ່າບໍລິການສາຍເຊົ່າ ແລະ ຄ່າທຳນຽມເຊົ່າ ຫ້ອງພັກ | 308,014,050 | 167,841,667 |
| ອື່ນໆ | 9,828 | - |
| | **9,066,465,545** | **11,333,183,334** |

## 15. ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ

| | *31 ທັນວາ 2012* | *31 ທັນວາ 2011* |
|---|---|---|
| | *ກີບ* | *ກີບ* |
| **ເງິນຝາກມີກຳນົດ:** | | |
| ທະນາຄານອຸດສາຫະກຳ ແລະ ການຄ້າຈີນຈຳກັດ - ສາຂາ ຮ່າໂນຍ | 318,520,000,000 | - |
| ທະນາຄານອຸດສາຫະກຳ ແລະ ການຄ້າຈີນຈຳກັດ - ສາຂາພະນົມເປັນ | 238,890,000,000 | - |
| ທະນາຄານອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ - ສາຂາ ດູໄບ | 238,890,000,000 | |
| ທະນາຄານອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ - ສາຂາ ຕະເວັນອອກກາງ | 772,411,000,000 | - |
| ທະນາຄານອຸດສາຫະກຳ ແລະ ການຄ້າຈີນຈຳກັດ - ສາຂາ ຫົງກົງ | 27,685,020,000 | - |
| | **1,596,396,020,000** | **-** |

ເງິນຝາກມີກຳນົດຢູ່ກັບທະນາຄານອື່ນເລີ້ມຈາກ 52 ມື້ ຫາ 5 ປີ ແລະ ອັດຕາດອກເບ້ຍ ຈາກ 0.7% ຫາ 3.6% ຕໍ່ ປີ.

## 16. ໜີ້ຕ້ອງສົ່ງໃຫ້ລູກຄ້າ

ຍອດເຫລືອເງິນຝາກຂອງລູກຄ້າ ແລະ ໜີ້ຕ້ອງສົ່ງອື່ນໆໃຫ້ລູກຄ້າ ນະວັນທີ 31 ທັນວາ 2012 ມີດັ່ງລຸ່ມນີ້:

| | *31 ທັນວາ 2012* | *31 ທັນວາ 2011* |
|---|---|---|
| | *ກີບ* | *ກີບ* |
| **ເງິນຝາກກະແສລາຍວັນ** | **375,978,496,322** | **27,660,689,759** |
| ໃນສະກຸນເງິນກີບ | 6,102,075,185 | 25,000,000 |
| ໃນສະກຸນເງິນຕາຕ່າງປະເທດ | 369,876,421,137 | 27,635,689,759 |
| **ເງິນຝາກປະຢັດ** | **61,308,180,370** | **9,124,706,045** |
| ໃນສະກຸນເງິນກີບ | 11,764,798,680 | 868,577,650 |
| ໃນສະກຸນເງິນຕາຕ່າງປະເທດ | 49,543,381,690 | 8,256,128,395 |
| **ເງິນຝາກມີກຳນົດ** | **102,776,633,695** | **845,464,200** |
| ໃນສະກຸນເງິນກີບ | 53,859,198,897 | 200,100,000 |
| ໃນສະກຸນເງິນຕາຕ່າງປະເທດ | 48,917,434,798 | 645,364,200 |
| **ໜີ້ຕ້ອງສົ່ງອື່ນໆລູກຄ້າ** | **46,106,063,095** | **70,286,040,005** |
| ໃນສະກຸນເງິນຕາຕ່າງປະເທດ | 46,106,063,095 | 70,286,040,005 |
| | **586,169,373,482** | **107,916,900,009** |

ອັດຕາດອກເບ້ຍສຳລັບໜີ້ຕ້ອງສົ່ງລູກຄ້າມີດັ່ງລຸ່ມນີ້:

| | *2012* | *2011* |
|---|---|---|
| | *ອັດຕາດອກເບ້ຍ* | *ອັດຕາດອກເບ້ຍ* |
| ເງິນຝາກກະແສລາຍວັນໃນສະກຸນເງິນກີບ | ບໍ່ມີດອກເບ້ຍ | ບໍ່ມີດອກເບ້ຍ |
| ເງິນຝາກກະແສລາຍວັນໃນສະກຸນເງິນຕາຕ່າງປະເທດ | ບໍ່ມີດອກເບ້ຍ | ບໍ່ມີດອກເບ້ຍ |
| ເງິນຝາກປະຢັດໃນສະກຸນເງິນກີບ | 1.00% - 3.00% | 1.00% - 3.00% |
| ເງິນຝາກປະຢັດໃນສະກຸນເງິນໂດລາ | 0.25% - 1.25% | 0.25% - 1.25% |
| ເງິນຝາກປະຢັດໃນສະກຸນເງິນບາດ | 0.25% - 1.00% | 0.25% - 1.00% |
| ເງິນຝາກມີກຳນົດໃນສະກຸນເງິນກີບ | 5.00% - 12.00% | 5% - 12% |
| ເງິນຝາກມີກຳນົດໃນສະກຸນເງິນໂດລາ | 0.75% - 6.25% | 0.50% - 6.25% |
| ເງິນຝາກມີກຳນົດໃນສະກຸນເງິນໄທບາດ | 0.75% - 5.00% | |
| ເງິນຝາກມີກຳນົດສະກຸນເງິນຢວນ | 0.25% - 0.40% | |

## 17. ໜີ້ຕ້ອງສົ່ງອື່ນໆ

| | *31 ທັນວາ 2012* | *31 ທັນວາ 2011* |
|---|---|---|
| | *ກີບ* | *ກີບ* |
| ໜີ້ຕ້ອງສົ່ງພະນັກງານ | 2,496,285,338 | 480,420,000 |
| ໜີ້ຕ້ອງສົ່ງຜູ້ສະໜອງ | 648,346,504 | 686,160,666 |
| ໜີ້ຕ້ອງສົ່ງອື່ນໆທີ່ກ່ຽວຂ້ອງກັບລາຍການໂອນ | 10,250,109,629 | - |
| | 23,250,000 | - |
| | **13,417,991,471** | **1,166,580,666** |

## 18. ອາກອນ

ອີງຕາມກົດໝາຍສ່ວຍສາອາກອນ ເລກທີ.001 ລົງວັນທີ 1 ມີນາ 2011, ອາກອນກຳໄລທີ່ມີຈຳນວນສູງກວ່າອາກອນຕ່ຳສຸດ 1% ຂອງລາຍຮັບທັງໝົດ (“ຄິດໄລ່ 1%) ຫລື 28% ຂອງກຳໄລກ່ອນຫັກອາກອນໂດຍອີງຕາມກົດໝາຍສ່ວຍສາອາກອນ.

| | *ປີປະຈຸບັນ* | *ປີຜ່ານມາ* |
|---|---|---|
| | *ກີບ* | *ກີບ* |
| **ທາງເລືອກທີ 1** | | |
| ລວມລາຍຮັບທີ່ຖືກເສຍອາກອນ | 72,549,835,143 | 142,347,795 |
| **ລາຍຮັບທີ່ຖືກເສຍອາກອນ 1% ຂອງ ກຳໄລທັງໝົດ** | **725,498,351** | **1,423,478** |
| **ທາງເລືອກ 2** | | |
| ກຳໄລກ່ອນເສຍອາກອນພາຍໃນປີ | 17,520,348,364 | (2,874,598,622) |
| ຂາດທຶນທີ່ຖືກຍົກມາຈາກປີຜ່ານມາ | (2,876,022,100) | - |
| **ກຳໄລສຸດທິກ່ອນເສຍອາກອນພາຍໃນປີ ແລະ ຂາດທຶນທີ່ຍົກຍອດມາ** | **14,644,326,264** | **-** |
| ລາຍໄດ້ຖືກອາກອນກຳໄລ່ | 14,644,326,264 | (2,874,598,622) |
| **ລາຍຈ່າຍອາກອນກຳໄລພາຍໃນປີ, ໃນອັດຕາ 28% ຂອງລາຍຮັບທັງໝົດທີ່ຖືກເສຍອາກອນ** | **4,100,411,354** | **-** |
| **ອາກອນກຳໄລ ໃນປະຈຸບັນ (ອັນໃດສູງກວ່າລະຫວ່າງສອງທາງເລືອກຂ້າງເທິງໃຫ້ເລືອກເອົາທາງເລືອກນັ້ນ)** | **4,100,411,354** | **1,423,478** |
| ອາກອນກຳໄລຄ້າງຈ່າຍຕົ້ນປີ | 1,423,478 | - |
| ອາກອນກຳໄລຈ່າຍໃນປີ | (3,532,568,765) | - |
| **ອາກອນກຳໄລຄ້າງຈ່າຍທ້າຍປີ** | **569,266,067** | **1,423,478** |

**18. ອາກອນ (ຕໍ່)**

ຍ້ອນວ່າການນຳໃຊ້ກົດໝາຍສ່ວຍສາອາກອນ ແລະ ລະບຽບການຕ່າງໆ ແມ່ນມີຫລາຍປະເພດ ເຊິ່ງອາດຈະແປຄວາມໄດ້ເປັນຫລາຍຢ່າງ, ຈຳນວນທີ່ໄດ້ຖືກລາຍງານຢູ່ໃນບົດລາຍງານການເງິນອາດຈະມີການປ່ຽນແປງຂຶ້ນກັບການໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

**19. ທຶນຈົດທະບຽນຖອກແລ້ວ**

ການເຄື່ອນໄຫວຂອງທຶນຈົດທະບຽນຖອກແລ້ວພາຍໃນປີມີດັ່ງລຸ່ມນີ້:

| | *31 ທັນວາ 2012* | *31 ທັນວາ 2011* |
|---|---:|---:|
| | *ກີບ* | *ກີບ* |
| ຍອດຍົກມາ | 239,970,000,000 | - |
| ທຶນຈົດທະບຽນຖອກເພີ້ມພາຍໃນປີ | - | 239,970,000,000 |
| **ຍອດເຫລືອທ້າຍປີ** | **239,970,000,000** | **239,970,000,000** |

**20. ຄັງແຮສະສົມຕາມລະບຽບການ**

| | *31 ທັນວາ 2012* | *31 ທັນວາ 2011* |
|---|---:|---:|
| | *ກີບ* | *ກີບ* |
| ຍອດຍົກມາ | - | - |
| ທຶນຈົດທະບຽນຖອກເພີ້ມພາຍໃນປີ | 1,054,391,491 | - |
| **ຍອດເຫລືອທ້າຍປີ** | **1,054,391,491** | **-** |

**21. ເງິນສົດ ແລະ ທຽບເທົ່າເງິນສົດ**

| | *31 ທັນວາ 2012* | *31 ທັນວາ 2011* |
|---|---:|---:|
| | *ກີບ* | *ກີບ* |
| ເງິນສົດໃນກຳມື | 9,919,894,435 | 6,516,730,397 |
| ບັນຊີກະແສລາຍວັນຢູ່ກັບທະນາຄານແຫ່ງ ສປປ ລາວ | 188,722,390,960 | 149,816,215,098 |
| ບັນຊີກະແສລາຍວັນຢູ່ກັບທະນາຄານອື່ນ | 204,889,421,391 | 166,467,878,629 |
| ເງິນຝາກມີກຳນົດພາຍໃນ 30 ວັນ | - | - |
| | **403,531,706,786** | **322,800,824,124** |

## 22. ບັນດາລາຍການພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນອື່ນທີ່ກ່ຽວຂ້ອງແມ່ນທຸກໆລາຍການເຄື່ອນໄຫວທີ່ໄດ້ດໍາເນີນງານກັບພາກສ່ວນອື່ນເຊິ່ງມີສາຍພົວພັນກັບສາຂາ,ພາກສ່ວນທີ່ຈະກ່ຽວຂ້ອງກັບສາຂາຖ້າຫາກວ່າ:

(a) ແບບທາງກົງ ຫຼື ແບບທາງອ້ອມ ໂດຍຜ່ານໜຶ່ງ ຫຼື ຫຼາຍສື່ກາງ, ພາກສ່ວນອື່ນຈະຕ້ອງ :

- ມີການຄວບຄຸມ(ຖືກຄວບຄຸມໂດຍ), ຫຼື ພາຍໃຕ້ການຄວບຄຸມ,ໂດຍ ສາຂາ (ໃນນີ້ລວມມີ ບໍລິສັດແມ່, ສາຂາ ແລະ ສະມາຊິກຂອງສາຂາ);
- ມີຜົນປະໂຫຍດນໍາກັນກັບສາຂາ ເຊິ່ງສິ່ງຜົນກະທົບທີ່ໃຫຍ່ຫຼວງຕໍ່ກັບສາຂາ; ຫຼື
- ມີສ່ວນຮ່ວມໃນການຄວບຄຸມສາຂາ.

(b) ພາກສ່ວນດັ່ງກ່າວແມ່ນມີຮຸ້ນສ່ວນນໍາສາຂາ

(c) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກຄົນສໍາຄັນຂອງ ຜູ້ບໍລິຫານຫຼັກຂອງສາຂາ ຫຼື ບໍລິສັດແມ່;

(d) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກທີ່ໃກ້ຊິດຂອງຄອບຄົວຂອງບຸກຄົນສະເພາະທີ່ໄດ້ກ່າວເຖິງໃນຂໍ້ (a) ຫຼື (d);

(e) ພາກສ່ວນທີ່ກ່ຽວຂ້ອງກໍ່ແມ່ນຜູ້ທີ່ຄວບຄຸມສາຂາ,ມີສ່ວນຮ່ວມໃນການຄວບຄຸມ ຫຼື ມີອິດທິພົນອັນໃຫຍ່ຫຼວງ, ຫຼື ມີສິດທິອໍານາດການໃນການອອກສຽງສ່ວນໃຫ່ຍຕໍ່ສາຂາທີ່ດໍາເນີນທຸລະກິດຢູ່, (ໂດຍທາງກົງ ຫຼື ທາງອ້ອມ), ທຸກໆພາກສ່ວນທີ່ໄດ້ກ່າວເຖິງໃນຂໍ້(c) ຫຼື (d); ຫຼື

(f) ພາກສ່ວນທີ່ກ່ຽວຂ້ອງແມ່ນແຜນຜົນປະໂຫຍດພາຍຫຼັງອອກວຽກຂອງພະນັກງານຂອງສາຂາ,ຫຼື ທະນາຄານ ຫຼື ສາຂາອື່ນໆທີ່ມີສາຍພົວພັນກັບສາຂາ.

**22. ບັນດາລາຍການພາກສ່ວນທີ່ກ່ຽວຂ້ອງ (ຕໍ່)**

ຍອດເຫລືອພາກສ່ວນທີ່ກ່ຽວຂ້ອງ ນະວັນທີ 31 ທັນວາ 2012 ມີດັ່ງນີ້:

| | *ໜີ້ຕ້ອງຮັບ* | *(ໜີ້ຕ້ອງສົ່ງ)* |
|---|---|---|
| | *ກີບ* | *ກີບ* |
| **ທະນາຄານອຸດສາຫະກຳ ແລະ ການຄ້າຈີນຈຳກັດ- ສາຂາ (ເອເຊຍ) ຮົງກົງ** | | |
| ເງິນຝາກກະແສລາຍວັນ | 144,203,615,014 | - |
| ເງິນຝາກປະຈຳ | - | (27,685,020,000) |
| **ທະນາຄານອຸດສາຫະກຳ ແລະ ການຄ້າຈີນ - ສຳນັກງານໃຫຍ່** | | |
| ເງິນຝາກກະແສເງິນສົດ | 60,685,806,377 | - |
| **ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນຈຳກັດ - ສາຂາຮ່າໂນ່ຍ** | | |
| ເງິນຝາກມີກຳນົດ | - | (318,520,000,000) |
| **ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນຈຳກັດ - ສາຂາພະນົມເປນ** | | |
| ເງິນຝາກມີກຳນົດ | - | (238,890,000,000) |
| **ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນຈຳກັດ - ສາຂາດູໄບ** | | |
| ເງິນຝາກມີກຳນົດ | - | (238,890,000,000) |
| **ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນຈຳກັດ - ສາຂາຕະເວັນອອກກາງ** | | |
| ເງິນຝາກມີກຳນົດ | - | (772,411,000,000) |

ລາຍການເຄື່ອນທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງມີດັ່ງນີ້ມີດັ່ງນີ້:

| | ລາຍຮັບດອກເບ້ຍ | ລາຍຈ່າຍດອກເບ້ຍ |
|---|---|---|
| | *ກີບ* | *ກີບ* |
| ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນຈຳກັດ - ສາຂາ ຮ່າໂນ່ຍ | - | 11,650,676,898 |
| ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນຈຳກັດ - ສາຂາ ພະນົມເປນ | - | 1,981,468,646 |
| ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນຈຳກັດ - ສາຂາ ຕາເວັນອອກກາງ | - | 1,433,915,072 |
| ທະນາຄານອຸດສາຫະກຳ ແລະ ການຄ້າຈີນຈຳກັດ - ສາຂາ (ເອເຊຍ) ຮົງກົງ | 108,049, 690 | 7,546,344,743 |

## 23. ເຫດການຫລັງປິດບັນຊີ

ນອກຈາກຂໍ້ມູນທີ່ໄດ້ເປີດເຜີຍໃນບົດລາຍງານການເງິນ, ໃນມື້ທີ່ບົດລາຍງານການເງິນໄດ້ຖືກສ້າງຂື້ນ ບໍ່ໄດ້ມີເຫດການໃດທີ່ສຳຄັນເກີດຂື້ນຫລັງຈາກວັນທີ 31 ທັນວາ 2012 ທີ່ສົ່ງຜົນກະທົບຕໍ່ຖານະທາງການເງິນ ຂອງສາຂາ ໃນວັນທີ 31 ທັນວາ 2012.

| | |
|---|---|
| ___________________________ | ___________________________ |
| ທ່ານ. ລູຈຽ້ນ | ທ່ານ. ຈ່າງ ຕ້າຊຽ້ນ |
| ຜູ້ອຳນວຍການ | ຫົວໜ້າຝ່າຍບັນຊີ |

ນະຄອນຫລວງວຽງຈັນ, ສປປ ລາວ
29 ມິນາ 2013